# ຂະບວນການຄຸ້ມຄອງໃນໄລຍະຂ້າມຜ່ານ ຈາກກຸ່ມຜູ້ຜະລິດ ໄປສູ່ສະຫະກອນໃນ ສປປລາວ

*Jean-Christophe Castella[1], ບຸນຖະໜອມ ບົວທອມ[2], ອານຸສິດ ແກ້ວໂພໄຊ[2] ແລະ ລິນຄຳ ດວງສະຫວັນ[2]*

## ບົດຄັດຫຍໍ້

ໃນໄລຍະແຫ່ງການຂ້າມຜ່ານ ຈາກການຜະລິດໃນຮູບແບບກຸ້ມຕົນເອງ ໄປສູ່ການຜະລິດເປັນສິນຄ້ານັ້ນຊາວກະສິກອນຜູ້ຜະລິດຂະໜາດນ້ອຍ ຈຳເປັນຕ້ອງໄດ້ມີການຈັດຕັ້ງ ເປັນຢ່າງດີ ເພື່ອຕອບສະໜອງຄວາມຕ້ອງການຂອງຕະຫຼາດທັງທາງດ້ານຜົນຜະລິດ ແລະ ຄຸນນະພາບ. ເຖິງຢ່າງໃດກໍ່ຕາມ, ການລິເລີ່ມທີ່ເກີດຂຶ້ນດ້ວຍຕົວມັນເອງຍາມໃດກໍ່ທໍ້ຖອຍຍ້ອນຂາດການສະໜັບສະໜູນທາງດ້ານສິນເຊື່ອທີ່ແທດເໝາະ, ຂາດໂຄງຮ່າງພື້ນຖານທີ່ເອື້ອອຳນວຍ, ຂາດລະບຽບກົດໝາຍ ຫຼື ຂໍ້ມູນຂ່າວສານທີ່ກ່ຽວຂ້ອງ. ຈາກການສ້າງຕັ້ງກຸ່ມຜູ້ຜະລິດລວມໝູ່ໃນເມື່ອກ່ອນ ຕໍ່ມາກໍແມ່ນການທັບມ້າງອາດີດສະຫະກອນແຫ່ງລັດ. ຈົນມາເຖິງປະຈຸບັນ, ກໍ່ຍັງບໍ່ທັນໄດ້ມີການອອກລະບຽບກົດໝາຍທີ່ກ່ຽວພົວພັນເຖິງສະມາຄົມຜູ້ຜະລິດ ຫຼື ສະຫະກອນການຜະລິດກະສິກຳໃນ ສປປລາວ ເທື່ອ. ຈະເຫັນໄດ້ກໍ່ພຽງແຕ່ເປັນສະມາຄົມທີ່ບໍ່ເປັນທາງການ ທີ່ມີແນວໂນ້ມວ່າຈະສາມາດສ້າງຕັ້ງເປັນກຸ່ມສິນເຊື່ອ ຫຼື ເປັນກຸ່ມສ້າງລາຍຮັບຂະໜາດນ້ອຍ. ເນື່ອງຈາກວ່າການຈັດຕັ້ງປະຕິບັດງານຂອງກຸ່ມຜູ້ຜະລິດຂະໜາດນ້ອຍ ແລະ ວິສະ ຫະກິດກະສິກຳໃນລາວ ສ່ວນຫຼວງ ຫຼາຍແມ່ນໄດ້ຮັບການສ້າງຕັ້ງຂຶ້ນໂດຍການສະໜັບສະໜູນຈາກ ໂຄງ ການສາກົນທີ່ໃຫ້ການຊ່ວຍເຫຼືອ ເພື່ອເປັນການວາງຮາກຖານໃຫ້ແກ່ການສ້າງຕັ້ງສະຫະກອນໃນອານາຄົດໄດ້. ເຖິງຢ່າງໃດກໍ່ຕາມ, ນະໂຍບາຍທີ່ມີທ່າອ່ຽງໃນການສ້າງຕັ້ງວິສະຫະກິດກະສິກຳຂະໜາດໃຫຍ່ເປັນການສ້າງການແຂ່ງຂັນທີ່ບໍ່ເປັນທຳໃຫ້ແກ່ວິສະຫະກິດຂະໜາດນ້ອຍໃນການລະດົມທຶນ ເພື່ອດຳເນີນທຸລະກິດຂອງຕົນ.

ຈາກການສຶກສາຄົ້ນຄວ້າເງື່ອນໄຂການສ້າງຕັ້ງສະມະຄົມ ຫຼື ສະຫະກອນຈາກຂອງກຸ່ມທີ່ມີໃນປະຈຸບັນ, ໄດ້ສະແດງໃຫ້ເຫັນເຖິງຄວາມສຳຄັນຂອງເຄື່ອຄ່າຍທາງສັງຄົມ ແລະ ອຳນາດສາຍພົວພັນຖານພີ່ນ້ອງ ຊຶ່ງເປັນປັດໄຈໜຶ່ງທີ່ກ່ຽວຂ້ອງກັບຄວາມຍືນຍົງຂອງກຸ່ມ. ດັ່ງນັ້ນ, ການນຳພາໃນຊຸມຊົນຈຶ່ງມີບົດບາດສຳຄັນ ໃນການຕິດຕໍ່ພົວພັນກັບສະມາຊິກພາຍໃນກຸ່ມກໍ່ຄືອົງການຈັດຕັ້ງຂັ້ນບ້ານ ແລະ

ຂັ້ນເມືອງ. ຂໍ້ສະເໜີແນະຈາກບົດສຶກສາຄົ້ນຄວ້າໃນຄັ້ງນີ້ ໄດ້ແນະນຳໃຫ້ມີການປັບປຸງກົດລະບຽບໃນການຄຸ້ມຄອງກຸ່ມ ຊຶ່ງເປັນເງື່ອນໄຂເບື້ອງຕົ້ນໃນການທີ່ຈະຂະຫຍາຍສ້າງຕັ້ງເປັນສະມາຄົມ ຫຼື ສະຫະກອນ (ການຕິດຕາມຄຸ້ມຄອງລະບົບສັນຍານເຕືອນຄວາມພ້ອມຂອງສະມາຊິກພາຍໃນກຸ່ມ ແລະ ຄະນະກຳມະການຄຸ້ມຄອງກຸ່ມ ໃນການປະຕິບັດໃຫ້ຖືກຕ້ອງຕາມກົດລະບຽບ, ການສະຫຼຸບລາຍງານການເຄື່ອນໄຫວວຽກງານໃຫ້ແກ່ສະມາຊິກພາຍໃນກຸ່ມຮັບຮູ້ ແລະ ຂະບວນການຕັດສິນບັນຫາຕ້ອງມີຄວາມໂປ່ງໄສພາຍໃນກຸ່ມ).

---

[1] ສະຖາບັນຄົ້ນຄວ້າ ເພື່ອການພັດທະນາ (IRD) ແລະ ສູນຄົ້ນຄວ້າປ່າໄມ້ນາໆຊາດ (CIFOR)

[2] ສູນຄົ້ນຄວ້ານະໂຍບາຍ ກະສິກຳ ແລະ ປ່າໄມ້, ສະຖາບັນຄົ້ນຄວ້າກະສິກຳ ແລະ ປ່າໄມ້ແຫ່ງຊາດ (NAFRI)

# Managing the transition from farmers' groups to agricultural cooperatives in Lao PDR

*Jean-Christophe Castella[1], Bounthanom Bouahom[2], Anousith Keophoxay[2], Linkham Douangsavanh[2]*

## Abstract

In a time of transition from subsistence to commercial agriculture, small farming households need to be better organized in order to match the market demand in terms of product volume and quality. However, spontaneous initiatives are often discouraged by the lack of proper support in terms of credit, infrastructures, legal framework or relevant information. After a period of collectivization, then the dismantlement of former State-cooperatives, the recent legislation related to farmers associations and agricultural cooperatives is difficult to translate into concrete collective action. Active informal associations in Laos tend to be credit groups or small income generating groups. Small farmers' groups and agro-enterprises have been created - in most cases with the help of international projects - that could lay the foundation of future cooperatives. However, policy distortions tend to favor large-scale enterprises and create unfair competition for small agro-enterprises in mobilizing capital.

The conditions for the emergence of larger associations or cooperatives from existing groups were investigated. Our study revealed the importance of social networks and power relations as a factor of cohesion within groups. Local leadership plays a crucial role in connecting the group members to the village and district institutions. Recommendations are provided to improve group management rules as a pre-requisite to up-scaling into larger associations, e.g. monitoring and alert system for the compliance of group members and managing committee to the internal rules, reporting procedures to group members, transparency of group decision making processes.

[1] Institut de Recherche pour le Développement (IRD, France) and Centre for International Forestry Research (CIFOR, Indonesia)

[2] Agriculture and Forestry Policy Research Centre (AFPRC), National Agriculture and Forestry Research Institute (NAFRI), Vientiane, Lao PDR

## 1. ພາກສະເໜີ

ສະຫະກອນສິນເຊື່ອ, ສະມາຄົມອອມຊັບ ແລະ ເງິນກູ້ໄດ້ກຳເນີດເກີດຂື້ນໃນລາວກ່ອນປີ 1975, ໃນເວລາທີ່ມີການປ່ຽນແປງລະບອບການປົກຄອງຂອງ ສ ປປ ລາວ. ພາຍຫຼັງປີ 1975, ກິດໝາຍສະຫະກອນກໍ່ໄດ້ຖືກຍົກເລີກໄປ ແລະ ເຮັດໃຫ້ກຸ່ມຊາວກະສິກອນ ຫຼື ທຸກໆສະມາຄົມ ແມ່ນໄດ້ຖືກຍົກເລີກໄປເຊັ່ນດຽວກັນ. ລັດຖະບານລາວ ກໍ່ໄດ້ຈັດຕັ້ງເອົາ 4 ອົງການຈັດຕັ້ງມະຫາຊົນຂື້ນໂດຍເຮັດຕາມຮູບແບບ ຫຼື ອົງການຈັດຕັ້ງຂອງສສຫວຽດນາມ, ເຮັດໜ້າທີ່ຄ້າຍຄືກັນກັບສະມາຄົມໃນລະດັບທ້ອງຖິ່ນ, ປະກອບດ້ວຍ: ແນວລາວສ້າງຊາດ, ສະຫະພັນແມ່ຍິງລາວ, ອົງການຈັດຕັ້ງຊາວໜຸ່ມລາວ ແລະ ສະຫະພັນກຳມະບານລາວ. ບັນດາອົງການຈັດຕັ້ງດັ່ງກ່າວ ແມ່ນເປັນຕົວແທນໃນທຸກລະດັບການປົກຄອງ (ແຕ່ຂັ້ນສູນກາງລົງຮອດຂັ້ນແຂວງ, ຂັ້ນເມືອງ ແລະ ຂັ້ນບ້ານ) ພາຍໃຕ້ການຄຸ້ມຄອງຈາກລັດຖະບານໃນຂັ້ນສູນກາງ. ແຕ່ເຖິງຢ່າງໃດກໍ່ຕາມ, ອົງການຈັດ ຕັ້ງຂອງ ສປປ ລາວ ກໍ່ບໍ່ຄືກັບຂອງ ສສຫວຽດນາມໄປໝົດ, ເນື່ອງຈາກວ່າບໍ່ມີອົງການຈັດຕັ້ງ ຊາວກະສິກອນຢູ່ໃນລາວທີ່ຈະສາມາດສະໜອງລະບຽບພື້ນຖານໃຫ້ການດຳເນີນງານ ແບບລວມໝູ່ ທີ່ກ່ຽວຂ້ອງກັບການຜະລິດ ແລະ ການຕະຫຼາດທາງດ້ານຜົນຜະລິດກະສິກຳ. ໃນຊຸມປີ 1975, ສະຫະກອນກະສິກຳແມ່ນໄດ້ຖືກສ້າງຕັ້ງຂື້ນໂດຍການລວບລວມເອົາພາຫານະການຜະລິດຂອງຊາວກະສິກອນພາຍໄຕ້ໂຄງປະກອບການຜະລິດລວມໝູ່ທີ່ມີຊື່ເອີ້ນວ່າ: "ສະຫະກອນ". ຄະນະຊີ້ນຳການພັດທະນາສະຫະກອນ ແມ່ນໄດ້ເຄື່ອນໄຫວວຽກງານພາຍໃຕ້ສະພາລັດຖະມົນຕີຈົນກະທັ້ງ ໄດ້ຖືກໂອນໄປເປັນກົມໜຶ່ງ ທີ່ຂື້ນກັບກະຊວງກະສິກຳ ແລະ ປ່າໄມ້ ໃນປີ 1983. ພາຍໃຕ້ລະບອບການວາງແຜນເສດຖະກິດຈາກລະດັບສູນກາງ ສະຫະກອນການຜະລິດເຫຼົ່ານີ້ໄດ້ຖືກພັດທະນາໄປຕາມຮູບແບບຂອງສສຫວຽດນາມ ແລະ ໄດ້ບັນລຸຜົນທາງດ້ານການຄ້ຳປະກັນສະບຽງອາຫານ ໃນຂອບເຂດທົ່ວປະເທດ. ຫຼັງຈາກນັ້ນເປັນຕົ້ນມາ ໃນຊ່ວງໄລຍະປີ 1978 ຈຳນວນຂອງສະຫະກອນແຫ່ງລັດແມ່ນໄດ້ເພີ່ມຂື້ນຢ່າງໄວວາ ມີເຖິງນວນ 1.300 ແຫ່ງ ແລະ ເພີ່ມເປັນ 3.000 ແຫ່ງພາຍໃນປີ 1985 (Machima and Prakash, 1987). ສຳລັບສະຫະກອນຂະໜາດນ້ອຍ ໃນລະດັບບ້ານກໍ່ໄດ້ເຕົ້າໂຮມກັນເຂົ້າເປັນສະຫະກອນໃຫຍ່ ແລະ ກາຍມາເປັນລັກສະນະອາຍາສິດ ທີ່ລະບຸໄວ້ໃນເຈ້ຍສໍຫຼາຍກວ່າທີ່ມີໃນຕົວຈິງ. ໃນປີ 1986, ກົນໄກເສດຖະກິດໃໝ່ໄດ້ເປັນການສ້າງຈຸດຈົບ ໃຫ້ແກ່ສະຫະກອນແຫ່ງລັດ ແລະ ມີການສົ່ງເສີມແນວຄວາມຄິດກ່ຽວກັບສະຫະກອນແບບໃໝ່ທີ່ດີກວ່າໃນການປັບຕົວສູ່ເສດຖະກິດຕະຫຼາດ (ພົມວິຫານ, 1986). ເຖິງຢ່າງໃດກໍ່ຕາມ, ມັນກໍ່ເປັນໄປບໍ່ໄດ້ທີ່ຈະໃຊ້ຄຳວ່າ: "ສະຫະກອນ" ເນື່ອງຈາກແນວຄວາມຄິດສະຫະກອນແບບໃໝ່ໃນທີ່ນີ້ມັນໄດ້ພົວພັນກັບບັນຫາການຈັດຕັ້ງຜະລິດແບບລວມໝູ່ ຊຶ່ງມີບົດຮຽນທາງດ້ານລົບ ໃນການວາງແຜນສ້າງ "ສະຫະກອນ" ຈາກສູນກາງ, ດັ່ງຕົວຢ່າງເຊັ່ນ: ການຈັດຕັ້ງປະຕິບັດວຽກງານຈາກຂັ້ນເທິງລົງຫາຂັ້ນລຸ່ມແມ່ນຍັງຂາດລະບົບການຄຸ້ມຄອງການບັນຊາ, ປະສິດຕິພາບໃນການກວດກາຍັງຕ່ຳ, ຂາດປັດໄຈສະໜອງທາງດ້ານເຕັກນິກວິຊາການປູກຝັງ, ຂາດການຝຶກອົບຮົມ, ຂາດລະບົບການສົ່ງເສີມ ແລະ ຂາດທັກສະໃນການຈັດການຄຸ້ມຄອງຂອງພະນັກງານສະຫະກອນ.

ມາເຖິງປີ 1990 ເປັນຕົ້ນມາ, ຮູບແບບສະຫະກອນແຫ່ງລັດແມ່ນໄດ້ຢຸດຕິລົງ ແລະ ທຸກພາຫະນະການຜະລິດ ແມ່ນໄດ້ສົ່ງຄືນຫຼືຂາຍໃຫ້ສະມາຊິກຜູ້ເປັນເຈົ້າຂອງເດີມ. ຕັ້ງແຕ່ນັ້ນເປັນຕົ້ນມາ, ກໍ່ເລີ່ມມີຄວາມຫຼາກຫຼາຍທາງດ້ານການຈັດຕັ້ງກຸ່ມທີ່ມີຮູບແບບການຜະລິດທີ່ແຕກຕ່າງກັນ ເຊັ່ນ: ກຸ່ມຜູ້ຜະລິດ, ສະມາຄົມຜູ້ນຳໃຊ້ນ້ຳ, ກຸ່ມສິນເຊື່ອ ແລະ ກຸ່ມອອມຊັບຂອງແມ່ຍິງ ແລະ ອື່ນໆ ທີ່ໄດ້ຮັບການສະໜັບສະໜູນຈາກທາງລັດຖະບານ. ກຸ່ມຕ່າງໆເຫຼົ່ານີ້ແມ່ນໄດ້ຈັດຕັ້ງປະຕິບັດວຽກງານ ເປັນເອກະລາດເຖິງແມ່ນວ່າ ຈະຍັງຂາດລະບຽບກົດໝາຍທີ່ກ່ຽວຂ້ອງໃນການດຳເນີນງານກໍ່ຕາມ. ແຕ່ພວກເຂົາໄດ້ພິຈາລະນາວ່າ ບັນດາກຸ່ມຕ່າງໆ ເຫຼົ່ານີ້ຄາດຫວັງວ່າຈະເປັນສະຫະກອນທີ່ຢູ່ໃນຂັ້ນຕຽມການທີ່ຈະສາມາດປ່ຽນ ເປັນສະຫະກອນ "ທັນສະໄໝ" ໄດ້ຢ່າງງ່າຍດາຍ. ນັບແຕ່ທ້າຍຊຸມປີ 1990 ເປັນຕົ້ນມາ, ມີຫຼາຍອົງການພັດທະນາສາກົນ (ສະຫະພັນສະຫະກອນສາກົນ, ອົງການສະຫະປະຊາຊາດ ເພື່ອການພັດທະນາ/UNDP, ອົງການອາຫານ ແລະ ການກະເສດ/FAO, ທະນາຄານພັດທະນາອາຊີ/ADB) ໄດ້ໃຫ້ການສະໜັບສະໜູນແກ່ລັດຖະບານລາວ ໃນການສົ່ງເສີມຂະບວນການສ້າງສະຫະກອນແບບໃໝ່ໃນ ສປປລາວ (Box 1).

## 2. ຈຸດປະສົງ ແລະ ວິທີການ

ການສຶກສາຄົ້ນຄວ້າໃນຄັ້ງນີ້ ແມ່ນໄດ້ຈັດຕັ້ງປະຕິບັດວຽກງານໂດຍສູນຄົ້ນຄວ້ານະໂຍບາຍກະສິກຳ ແລະ ປ່າໄມ້ ຊຶ່ງໄດ້ວາງຈຸດປະສົງການສຶກສາຄົ້ນຄວ້າຫຼັກອອກດັ່ງນີ້: (i) ເພື່ອເປັນການສະລຸບປະສົບປະການຈາກຫຼາຍໂຄງການທີ່ໄດ້ຈັດຕັ້ງປະຕິບັດວຽກງານພາຍໃຕ້ອົງການຈັດຕັ້ງຂອງລັດຖະບານ ແລະ ໂຄງການການພັດທະນາສາກົນຕ່າງໆທີ່ກ່ຽວຂ້ອງ ເຖິງການພັດທະນາຊຸມຊົນ, (ii) ເພື່ອສຶກສາຈາກທັງສອງປະສົບການ ທີ່ຜ່ານມາອັນໄດ້ແກ່ປະສົບການທີ່ປະສົມຜົນສຳເລັດ ແລະ ບໍ່ປະສົບຜົນສຳເລັດທີ່ໄດ້ລິເລີ່ມດຳເນີນງານຜ່ານມາໃນອາດີດທີ່ພົວພັນເຖິງການຈັດຕັ້ງກຸ່ມຊາວກະສິກອນ, ສະມາຄົມ ແລະ ຮູບແບບການດຳເນີນງານຂອງສະຫະກອນ, ແລະ (iii) ເພື່ອເປັນການສະໜອງທິດທາງທີ່ແທດເໝາະໃຫ້ແກ່ການສ້າງນະໂຍບາຍພັດທະນາ ເພື່ອໃຫ້ກ້າວໄປເຖິງການສ້າງສະຫະກອນແບບໃໝ່ໃນສປປລາວ.

ວິທີການສຶກສາຄົ້ນຄວ້າ ແມ່ນໄດ້ດຳເນີນໄປໂດຍການທົບທວນເອກະສານ ແລະ ບົດລາຍງານຕ່າງໆທີ່ກ່ຽວຂ້ອງ, ນຳໃຊ້ແບບຟອມສອບຖາມຈຳນວນໜຶ່ງເພື່ອສຳພາດກັບພາກສ່ວນທີ່ກ່ຽວຂ້ອງຜູ້ທີ່ເຄີຍຈັດຕັ້ງປະຕິບັດວຽກງານຜ່ານມາທີ່ພົວພັນເຖິງກິດຈະກຳການພັດທະນາຊຸມຊົນ ແລະ ສົ່ງເສີມກຸ່ມຊາວກະສິກອນ. ຊຶ່ງໄດ້ສຶກສາຄົ້ນຄວ້າຈາກເອກກະສານ ແລະ ບົດລາຍງານຕ່າງໆໂດຍການປຶກສາຫາລືກັບພາກສ່ວນທີ່ກ່ຽວຂ້ອງເປັນຈຳນວນ 25 ໂຄງການທີ່ເຮັດວຽກຮ່ວມກັບກຸ່ມຊາວກະສິກອນໃນເຂດເປົ້າໝາຍສຶກສາຄົ້ນຄວ້າ.

## 3. ຍ້ອນຫຍັງຈຶ່ງຈຳເປັນຕ້ອງມີສະຫະກອນແບບໃໝ ໃນສປປລາວ?

ພວກເຮົາອາດອີງໃສ່ຮູບແບບທິດສະດີທາງດ້ານເສດຖະກິດແຫ່ງຊາດທີ່ໄດ້ຖືກນຳມາສະເໜີໃນເບື້ອງຕົ້ນໂດຍທ່ານ Braudel ແລະ ຖືກນຳໃຊ້ເຂົ້າໃນເສດຖະກິດຂອງ ສສຫວຽດນາມ ໂດຍທ່ານ Bergeret (2002). ປະເທດລາວກໍ່ຄືກັນກັບສສຫວຽດນາມ ທີ່ໄດ້ສືບທອດມູນເຊື້ອພື້ນຖານເສດຖະກິດລວມໝູ່ (ພື້ນຖານເສດຖະກິດຄອບຄົວ ແລະ ເສດຖະກິດແຫ່ງລັດ). ຊຶ່ງໃນລະດັບພື້ນຖານກໍ່ແມ່ນເສດຖະກິດຄອບຄົວພາຍໃຕ້ການດຳ

ເນີນທຸລະກິດ ແບບບໍ່ເປັນທາງການແຕ່ໄດ້ຮັບການ ຈັດຕັ້ງປະຕິບັດຢ່າງເອົາຈິງເອົາຈັງ ແລະ ມີປະສິດທິ ພາບ. ໃນລະດັບພື້ນຖານເສດຖະກິດ ແຫ່ງລັດກໍ່ມີ ຫຼາຍບໍລິສັດຂະໜາດໃຫຍ່ ທີ່ພົວພັນໂດຍກົງກັບ ທາງລັດຖະບານ ແລະ ເຈລະຈາກັບນັກລົງທຶນ ຕ່າງປະເທດ ເພື່ອເຂົ້າມາດຳເນີນທຸລະກິດ. ແຕ່ ບັນຫາຢູ່ບ່ອນວ່າ ການຈັດຕັ້ງປະຕິບັດງານແມ່ນ ຍັງຂາດຂັ້ນຊ່ວງກາງ (ລະຫວ່າງພື້ນຖານເສດຖະ ກິດຄອບຄົວ ແລະ ເສດຖະກິດແຫ່ງລັດ) ຊຶ່ງມີ

ແຕ່ຍັງຂາດການກໍ່ສ້າງຂັ້ນທີ່ໜຶ່ງທີເປັນ ຕົວແທນໃຫ້ແກ່ທຸລະກິດຂະໜາດນ້ອຍ, ທຸລະ ກິດຂະໜາດກາງ, ສະມາຄົມ, ສະຫະກອນ ແລະ ຮູບແບບອົງການຈັດຕັ້ງພົນລະເຮືອນຕ່າງໆ. ຊຶ່ງ ຂັ້ນດັ່ງກ່າວນີ້, ມີຄວາມຈຳເປັນຢ່າງຍິ່ງທີ່ຈະເຮັດ ໃຫ້ຊາວກະສິກອນມີສ່ວນຮ່ວມ, ໄດ້ຮັບປະໂຫຍດ ແລະ ໂອກາດທາງດ້ານຕະຫຼາດທີ່ພົວພັນເຖິງ ການລົງທຶນຈາກຕ່າງປະເທດ ເພື່ອເປັນການຫຼີກ ລ້ຽງບັນຫາທີ່ຫຼໍ່ແຫຼມໃນການປ່ຽນແປງເສດຖະ ກິດຢ່າງໄວວາ.

ຄວາມຈຳເປັນ ເພື່ອຫຼີກລ້ຽງບໍ່ໃຫ້ການຈັດຕັ້ງປະຕິ ບັດວຽກງານກະໂດດຂັ້ນ ແລະ ສາມາດເກາະກ່າຍ ກັນໄດ້ເປັນແຕ່ລະຂັ້ນຕອນ. ທ່ານ Braudel ຈຶ່ງ ໄດ້ຈິນຕະນາການຮູບພາບຈຳລອງເຫດການໃນ ການກໍ່ສ້າງຕຶກອາຄານສອງຊັ້ນ ອັນປະກອບດ້ວຍ ຊັ້ນໃຕ້ດິນ (ກໍ່ຄືຊັ້ນພື້ນຖານ ຫຼື ຂັ້ນຮາກຖານ) ທີ່ ເປັນຕົວແທນໃຫ້ແກ່ພື້ນຖານເສດຖະກິດຄອບ ຄົວ ແລະ ຊັ້ນທີ່ສອງເປັນຕົວແທນໃຫ້ແກ່ເສດຖະ ກິດແຫ່ງລັດ (ຮູບພາບ 1 ແລະ ຕາຕະລາງ1).

ຮູບພາບ 1: ທິດສະດີ 3 ຊັ້ນເສດຖະກິດແຫ່ງຊາດ ຂອງທ່ານ Braudel




ຕາຕະລາງທີ 1: ມີສາມຊັ້ນຂອງເສດຖະກິດແຫ່ງຊາດ ໃນ ສປປ ລາວ

| | ການພັດທະນາແບບປະສົມປະສານ | ການປຸງແຕ່ງ-ການຕະຫຼາດ | ສິນເຊື່ອ-ອອມຊັບ |
|---|---|---|---|
| ພາກສ່ວນໃນລະບົບ (ຊັ້ນທີ2) | ມີຫຼາຍການຊ່ວຍເຫຼືອລ້າເພື່ອພັດທະນາພື້ນຖານໂຄງລ່າງ ແລະ ຫຼຸດຜ່ອນຄວາມທຸກຍາກ | ບໍລິສັດ, ລັດວິສາຫະກິດ, ນັກລົງທຶນຊາວຕ່າງປະເທດ ດຳເນີນທຸລະກິດຮ່ວມກັນ | ທະນະຄານການຄ້າ ຂອງລັດ ແລະ ເອກກະຊົນ |
| ພາກສ່ວນກາງ (ຊັ້ນທີ1) | ວິສະຫະກິດກະສິກຳຂະໜາດນ້ອຍ ແລະ ສະຫະກອນສິນເຊື່ອ<br>ພໍ່ຄ້າຄົນກາງ ແລະ ຊາວຄ້າຂາຍ | | |
| ພາກສ່ວນນອກລະບົບ (ຊັ້ນໃຕ້ດິນ) | ກອງທຶນໝູນວຽນຂອງບ້ານ, ທະນາຄານເຂົ້າ ແລະ ທະນາຄານສັດລ້ຽງ | ວິສະຫະກິດພື້ນຖານຄອບ ຄົວ ແລະ ກຸ່ມຊາວກະສິ ກອນ | ເງິນກູ້ຈາກຄົວເຮືອນ ເຖິງ ຄົວເຮືອນ ແລະ ຜູ້ໃຫ້ກູ້ຢືມເງິນ |

ນອກເໜືອຈາກການຜະລິດ ແລະ ການຕະຫຼາດທາງດ້ານກະສິກຳແລ້ວສະຫະກອນກໍ່ຍັງສາມາດຫຼິ້ນບົດບາດໃນການເຮັດໃຫ້ສະມາຊິກມີສິດອຳນາດ ຫຼື ໃຫ້ສິດແກ່ປະຊາຊົນທ້ອງຖິ່ນ.

ນອກຈາກນັ້ນ, ສະຫະກອນແມ່ນມີຄວາມສຳຄັນແກ່ລັດຖະບານໃນການສະໜັບສະໜູນພາກສ່ວນເສດຖະກິດ ເພື່ອໃຫ້ສອດຄ່ອງກັບຍຸດທະສາດຫຼຸດຜ່ອນຄວາມທຸກຍາກ: (i) ເພື່ອເປັນການຜູກມັດກັບທຸກໆອົງການຈັດຕັ້ງ ພາຍໃນສັງຄົມໃນຂະບວນການພັດທະນາ ແລະ (ii) ເພື່ອເປັນການແບ່ງປັນບັນດາຜົນປະໂຫຍດຄືນໃໝ່ໃຫ້ທົ່ວເຖິງປະຊາຊົນ ໃນການເປີດປະເທດສູ່ເສດຖະກິດໃນພາກພື້ນ. ເຖິງຢ່າງໃດກໍ່ຕາມ, ຖ້າຫາກຂະບວນການປ່ຽນແປງດັ່ງກ່າວນີ້ ບໍ່ມີການຄຸ້ມຄອງທີ່ດີກໍ່ຈະເຮັດໃຫ້ລັດຖະບານ ມີຄວາມສ່ຽງທີ່ຈະເສຍ ບົດບາດການຄວບຄຸມອຳນາດ. ຍ້ອນສາເຫດດັ່ງກ່າວນີ້, ຈຶ່ງເຮັດໃຫ້ປະເດັນການປ່ຽນແປງຈາກການຈັດຕັ້ງກຸ່ມຊາວກະສິກອນໃຫ້ກ້າວໄປເປັນສະຫະກອນຫຼືສະມາຄົມໃນເມື່ອກ່ອນມີການດຳເນີນງານຢ່າງຊັກຊ້າ ແລະ ມີບໍ່ຜົນຄືບໜ້າໃດໆ.

## 4. ຍັງມີສະຫະກອນຮູບແບບໃດແດ່ທີ່ດຳເນີນງານໃນ ສປປລາວ?

ມີຄຳຖາມຢູ່ບ່ອນວ່າ ກ່ອນອື່ນຕ້ອງໄດ້ນິຍາມຮູບແບບສະຫະກອນ ທີ່ເຮັດໜ້າທີ່ຕົ້ນຕໍໃນການເຊື່ອມໂຍງລະຫ່ວາງຊັ້ນໃຕ້ດິນ, ຊັ້ນພື້ນຖານຂອງໂຄງປະກອບສ້າງ ທາງເສດຖະກິດຄອບຄົວກັບຊັ້ນທີສອງ, ອັນໄດ້ແກ່ເສດຖະກິດແຫ່ງລັດ. ບັນຫານີ້, ຈະພາພວກເຮົາກັບຄືນ ໄປສູ່ແນວຄວາມຄິດຕົ້ນສະບັບທີ່ວ່າສະຫະກອນ ຄືກຸ່ມກຸ້ມຕົນເອງໂດຍການສ້າງເສດຖະກິດ ໃຫ້ເປັນຈຸດແຂງພາຍໃນສັງຄົມ (EDC, 2002). ສະຫະພັນສະຫະກອນນາໆຊາດໄດ້ໃຫ້ນິຍາມວ່າ "ສະມາຄົມທີ່ເປັນອິດສະຫຼະແມ່ນການລວມຕົວຂອງບຸກຄົນດ້ວຍຄວາມສະມັກໃຈເພື່ອຕອບສະໜອງຄວາມຕ້ອງການ ແລະ ຄວາມມຸ້ງຫວັງ ໃຫ້ເປັນອັນໜຶ່ງອັນດຽວກັນທາງດ້ານເສດຖະກິດ, ສັງຄົມ ແລະ ວັດທະນະທຳ ໂດຍເປັນເຈົ້າຂອງຮ່ວມກັນ ໃນການຄຸ້ມຄອງໂຮງຈັກໂຮງງານຢ່າງມີປະຊາທິປະໄຕ". ນິຍາມສະຫະກອນຂອງແຕ່ລະປະເທດແມ່ນບໍ່ຄືກັນອີງຕາມລະບຽບກົດໝາຍ ແລະ ລະບົບການປົກຄອງຂອງແຕ່ລະປະເທດ. ດັ່ງນັ້ນ, ພວກເຮົາຈຶ່ງໄດ້ໃຫ້ນິຍາມສະຫະກອນຊຶ່ງມີທີ່ມາຈາກສສ.ຫວຽດນາມ ເນື່ອງຈາກວ່າເປັນປະເທດທີ່ມີທິດທາງ ການເມືອງຄ້າຍຄືກັນກັບສປປລາວ, ຊຶ່ງໄດ້ນິຍາມໄວ້ວ່າ: "ຫົວໜ່ວຍເສດຖະກິດນິຕິບຸກຄົນ ທີ່ມີການຄຸ້ມຄອງແບບກຸ້ມຕົນເອງຖືກສ້າງຕັ້ງຂຶ້ນໂດຍຊາວຜູ້ອອກແຮງງານທີ່ມີຄວາມຕ້ອງການເພື່ອຜົນປະໂຫຍດອັນໜຶ່ງອັນດຽວກັນ ແລະ ພ້ອມກັນປະກອບສ່ວນຢ່າງສະມັກໃຈໂດຍການທຸ້ມເທເຫື່ອແຮງ ແລະ ສະຕິປັນຍາເພື່ອສົ່ງເສີມ ຄວາມເຂັ້ມແຂງລວມໝູ່ກໍຄືຂອງສະມາຊິກແຕ່ລະຄົນ, ຈຸດປະສົງເພື່ອຊ່ວຍເຫຼືອຊຶ່ງກັນ ແລະ ກັນໃນການຜະລິດ, ການດຳເນີນທຸລະກິດ ແລະ ການບໍລິການໃຫ້ໄດ້ຮັບປະສິດທິຜົນຍິ່ງໆຂຶ້ນໄປ, ເພື່ອປັບປຸງຊີວິດທັງ ເປັນການປະກອບສ່ວນໃນການພັດທະນາເສດຖະກິດ-ສັງຄົມຂອງປະເທດ" (EDC, 2002).

ອີງຕາມ "ຫຼັກການການຮ່ວມມື"ທີ່ມີການຮັບຮອງແລ້ວວ່າສະຫະກອນ ແມ່ນບັນດາສະມາຊິກທັງເປັນເຈົ້າຂອງ ແລະ ທັງເປັນຜູ້ຄຸ້ມຄອງໂຮງຈັກໂຮງງານດ້ວຍຄວາມສະມັກໃຈ, ເປັນອິດສະຫຼະກຸ້ມຕົນເອງ. ບັນດາສະຫະກອນທີ່ດຳເນີນງານໄປພາຍໃຕ້ກົດໝາຍສະຫະກອນທີ່ປະກາດໃຊ້

ໂດຍລັດຖະບານ ແລະ ໄດ້ຂຶ້ນທະບຽນເປັນຫົວໜ່ວຍນິຕິບຸກຄົນ. ການຮັກສາຄວາມເປັນເອກກະລາດຂອງສະຫະກອນໃຫ້ຄົງຢູ່ນັ້ນແມ່ນຂຶ້ນກັບກອງປະຊຸມໃຫຍ່ຂອງສະມາຊິກ ແລະ ໂຄງຮ່າງການຈັດຕັ້ງທີ່ມີປະຊາທິປະໄຕອັນໂປ່ງໃສ. ມີກົດລະບຽບເປັນຂອງຕົນເອງ ຊຶ່ງໄດ້ຖືກຮັບຮອງຈາກສະມາຊິກ (Za-Zenchu, 2008). ສໍາລັບສະຫະກອນກະສິກໍາ ເປັນຜູ້ໃຫ້ບໍລິການສະມາຊິກ 4 ປະເພດການບໍລິການຕົ້ນຕໍໄດ້ແກ່: ສິນເຊື່ອ, ຂາເຂົ້າກະສິກໍາ, ການຕະຫຼາດ ແລະ ທິດຊີ້ນໍາຕ່າງໆ (ອັນໄດ້ແກ່ການຝຶກອົບຮົມ, ການສົ່ງເສີມ ແລະ ອື່ນໆ). ນອກຈາກນີ້, ສະຫະກອນຍັງເຮັດໜ້າທີ່ພົວພັນປະສານງານໃນທາງສາຍຕັ້ງກັບຜູ້ສະໜອງວັດຖຸ ແລະ ຜູ້ເກັບຊື້ພາຍໃນຊຸມຊົນທ້ອງຖິ່ນ (ໃນຊັ້ນພື້ນຖານ ແລະ ຊັ້ນສອງ). ນອກຈາກນີ້, ສະຫະກອນຍັງໄດ້ພັດທະນາໂຄງລ່າງພື້ນຖານອັນໄດ້ແກ່: ສາງເກັບມ້ຽນສິນຄ້າ, ລະບົບການຂົນສົ່ງ, ການປຸງແຕ່ງເພື່ອເພີ່ມມູນຄ່າຂອງຜະລິດຕະພັນ ແລະ ເປັນການອໍານວຍຄວາມສະດວກໃຫ້ແກ່ການດໍາເນີນທຸລະກິດກັບພາຍນອກ.

ເນື່ອງຈາກຄວາມຫຼາກຫຼາຍທາງດ້ານບົດບາດໜ້າທີ່ ແລະ ຈຸດປະສົງໃນການສ້າງຕັ້ງສະຫະກອນ ເພື່ອຂະຫຍາຍກິດຈະກໍາການດໍາເນີນທຸລະກິດ ແລະ ການບໍລິການຂອງຕົນໃຫ້ສະມາຊິກແລ້ວ. ສະຫະກອນຍັງສາມາດສ້າງຄວາມສໍາພັນກັບສະຫະພັນສະຫະກອນນາໆຊາດທີ່ໃຫ້ການຊ່ວຍເຫຼືອ ແລະ ຊີ້ນໍາໃນການເຄື່ອນໄຫວກິດຈະກໍາຂອງສະຫະກອນ. ໃນອີກດ້ານໜຶ່ງ, ກຸ່ມກໍ່ແມ່ນການຈັດຕັ້ງລວມໝູ່ ຂອງບັນດາສະມາຊິກທີ່ມີຄວາມສົນໃຈ ເພື່ອຜົນປະໂຫຍດລວມໝູ່. ກຸ່ມບໍ່ແມ່ນນິຕິບຸກຄົນ ແລະ ບໍ່ມີໂຄງຮ່າງການຈັດຕັ້ງໃນສາຍຂວາງ ຫຼື ສາຍຕັ້ງກຸ່ມດໍາເນີນທຸລະກິດຂະໜາດນ້ອຍດ້ວຍການນໍາໃຊ້ທຶນຮອນຈໍານວນນ້ອຍໃນຂອບເຂດຂອງວຽກງານ ແລະ ຂະໜາດທີ່ຈໍາກັດ (Za-Zenchu, 2008).

ເງື່ອນໄຂທີ່ຈໍາເປັນ ໃນການຫັນເອົາບັນດາກຸ່ມທີ່ດໍາເນີນຢູ່ໃນປະຈຸບັນ ໄປເປັນສະຫະກອນແມ່ນ: (i) ລັດຖະບານຕ້ອງເຮັດໃຫ້ວິໄສທັດໃນການສ້າງສະຫະກອນຈະແຈ້ງ ໂດຍອອກດໍາລັດກໍານົດນິຍາມ ແລະ ກອບເນື້ອໃນທາງດ້ານກົດໝາຍຢ່າງຄົບຖ້ວນ ຊຶ່ງໃນເດືອນມີນາ 2010 ໄດ້ມີດໍາລັດສະຫະກອນອອກມາຫຼັງຈາກທີ່ໄດ້ທົບທວນກັນມາເປັນເວລາຫຼາຍປີ (ລັດຖະບານລາວ, 2010) ແລະ (ii) ເພື່ອປູກຈິດສໍານຶກໃຫ້ຮູ້ກ່ຽວກັບວິໄສທັດອັນໃໝ່ຂອງສະຫະກອນ, ເພື່ອເປັນການຫຼີກລ້ຽງຄວາມບົນເປກັບສະຫະກອນແຫ່ງລັດໃນເມື່ອກ່ອນ. ຊຶ່ງມັນໄດ້ກາຍມາເປັນບູລິມະສິດໜຶ່ງໃນແຜນງານຍຸດທະສາດຂອງກະຊວງກະສິກໍາ ແລະ ປ່າໄມ້ ໃນປີ 2011-2020 (ກະຊວງກະສິກໍາ ແລະ ປ່າໄມ້, 2010).

## 5. ຊັ້ນພື້ນຖານເສດຖະກິດ ແລະ ລັກສະນະພື້ນຖານຂອງກຸ່ມຊາວກະສິກອນໃນປະຈຸບັນມີສະພາບເປັນແນວໃດ?

ໃນໄລຍະຜ່ານມາ, ວິສະຫະກິດຂະໜາດນ້ອຍ, ວິສະຫະກິດຈຸລະພາກ ແລະ ອົງການຈັດຕັ້ງມະຫາຊົນ ໂດຍສະເພາະສະຫະພັນແມ່ຍິງລາວແມ່ນເປັນຜູ້ຄຸ້ມຄອງ ການຈັດຕັ້ງປະຕິບັດງານ ແລະ ເປັນຕົວແທນໃຫ້ແກ່ເສດຖະກິດລາວ (ຊັ້ນທີໜຶ່ງ). ບັນດາກຸ່ມຊາວກະສິກອນ ສ່ວນຫຼາຍແມ່ນກຸ່ມທີ່ໄດ້ຈັດຕັ້ງປະຕິບັດວຽກງານ ທີ່ບໍ່ໄດ້ຖືກຮັບຮູ້ເປັນນິຕິບຸກຄົນ ຫຼື ບໍ່ຢູ່ໃນກອບກົດໝາຍຮອງຮັບ

ເປັນສະຫະກອນ. ດັ່ງນັ້ນ, ບັນດາກຸ່ມດັ່ງກ່າວນັ້ນ ຈຶ່ງໄດ້ຂຶ້ນທະບຽນ ເປັນວິສະຫະກິດເອກະຊົນ ຍົກເວັ້ນພຽງແຕ່ສະຫະກອນສິນເຊື່ອ ເພື່ອສົ່ງເສີມທຸລະກິດຂະໜາດນ້ອຍ (CCSP) ທີ່ໄດ້ຂຶ້ນທະບຽນສະຫະກອນຢ່າງ ເປັນທາງການພາຍໃຕ້ການປະກາດໃຊ້ດຳລັດວ່າດ້ວຍສິນເຊື່ອ ຈຸລະພາກມາຕັ້ງແຕ່ປີ 1996. ຜ່ານການເກັບກຳຂໍ້ມູນຕົວຈິງຢູ່ເຂດພື້ນທີ່ເປົ້າໝາຍສຶກສາຄົ້ນຄວ້າໄດ້ສະແດງໃຫ້ເຫັນຢ່າງຈະແຈ້ງວ່າການເຂົ້າເຖິງສິນເຊື່ອເປັນການລິເລີ່ມປະກອບສ່ວນ ເຮັດໃຫ້ການດຳເນີນງານຂອງກຸ່ມໄປໄດ້ດີ ແລະ ມີຄວາມໝັ້ນຄົງ. ດັ່ງນັ້ນ, ພວກເຮົາຈຶ່ງສາມາດເວົ້າໄດ້ວ່າ ຮູບແບບຂອງກຸ່ມຊາວກະສິກອນປະກອບມີ 3 ຮູບແບບດ້ວຍກັນ (ຕາຕະລາງ 2) ອີງຕາມກິດຈະກຳ ແລະ ເງື່ອນໄຂຂອງ ການກຳເນີດຂຶ້ນອັນໄດ້ແກ່: (i) ການພັດທະນາແບບປະສົມປະສານລວມໝູ່, (ii) ຜົນຜະລິດທາງການຕະຫຼາດ, ແລະ (iii) ການບໍລິການສິນເຊື່ອ. ເຖິງຢ່າງໃດກໍ່ຕາມ, ການຈັດຮູບແບບດັ່ງກ່າວນີ້ບາງຄັ້ງກໍ່ບໍ່ແນ່ນອນ ຄ້າຍຄືກັນກັບການວິວັດທະນາການຂອງກຸ່ມທີ່ມີການຍ້າຍຈາກກຸ່ມປະເພດໜຶ່ງໄປຫາອີກກຸ່ມໜຶ່ງ. ເຊັ່ນໃນກໍລະນີຂອງສະຫະກອນສິນເຊື່ອເພື່ອສົ່ງເສີມທຸລະກິດຂະໜາດນ້ອຍ (CCSP) ທີ່ໄດ້ລິເລີ່ມການພັດທະນາແບບປະສົມປະສານໂດຍການຕະຫຼາດການປຸງແຕ່ງ ແລະ ພັດທະນາເຄືອຄ່າຍສິນເຊື່ອທີ່ກວ້າງຂວາງ (Box2). ປະຫວັດຄວາມເປັນມາຂອງວິສະຫະກິດ "ຜະລິດຕະພັນຂອງຊາວກະສິກອນ" ທີ່ຍົກຕົວຢ່າງໃຫ້ເຫັນເຖິງຄວາມເປັນໄປໄດ້ ໃນການຫັນຮູບແບບການແປຮູບຜະລິດຕະພັນຈາກການລິເລີ່ມພາຍໃນຊຸມຊົນທ້ອງຖິ່ນໄປສູ່ຂະບວນການສະຫະກອນຮູບແບບໃໝ່. ທັງໝົດກຸ່ມຊາວກະສິກອນທີ່ກ່າວມາພວກເຮົາສາມາດຖອດຖອນບົດຮຽນໄດ້ຈາກປະຫວັດຄວາມເປັນມາຂອງການສ້າງຕັ້ງກຸ່ມທີ່ຜ່ານມາມີດັ່ງນີ້:

## 5.1 ກຸ່ມພັດທະນາຊຸມຊົນ

ລັດຖະບານ, ພ້ອມດ້ວຍອົງການຈັດຕັ້ງສາກົນ ແລະ ພາກສ່ວນທີ່ໃຫ້ການຊ່ວຍເຫຼືອ ພາຍໃຕ້ໂຄງການພັດທະນາໄດ້ສົ່ງເສີມກຸ່ມພັດທະນາຊຸມຊົນຢ່າງເອົາຈິງເອົາຈັງ. ອົງການເຫຼົ່ານີ້ໄດ້ສຸມຄວາມພະຍາຍາມໃສ່ ການພັດທະນາໃນຂັ້ນບ້ານທີ່ພິຈາລະນາຈາກການຕິດພັນກັບ "ທຳມະຊາດ" ໃນກິດຈະກຳ "ການພັດທະນາຊຸມຊົນ" ກິດຈະກຳຕ່າງໆເຫຼົ່ານີ້ລ້ວນແຕ່ໄດ້ຮັບການສະໜອງສິນເຊື່ອ-ອອມຊັບ ແລະ ໃນບາງຄັ້ງກໍ່ໄດ້ຮັບການພັດທະນາພື້ນຖານໂຄງລ່າງ.

ບົນພື້ນຖານການສຳຫຼວດ ແລະ ວິເຄາະສະພາບລວມໃນລະດັບບ້ານ ເຫັນໄດ້ວ່າຮູບແບບກິດຈະກຳຕ່າງໆ ໄດ້ຖືກອອກແບບໃຫ້ສອດຄ່ອງກັບຄວາມຄາດຫວັງຂອງປະຊາຊົນ. ການວິເຄາະ "ວິທີການມີສ່ວນຮ່ວມ" ໄດ້ສະແດງໃຫ້ເຫັນວ່າການຄັດເລືອກເອົາຜູ້ທີ່ມີຄວາມສາມາດທີ່ຈະດຳເນີນງານພາຍໃນກຸ່ມ ແມ່ນຫຍຸ້ງຍາກລຳບາກຫຼາຍເພາະການປະສານງານພາຍໃນຊຸມຊົນໂດຍທົ່ວໄປແລ້ວ ແມ່ນຕ້ອງໄດ້ຜ່ານອຳນາດການປົກຄອງບ້ານ. ດັ່ງນັ້ນ, ນາຍບ້ານ ແລະ ຄະນະບ້ານຈຶ່ງເປັນຜູ້ຕາງໜ້າ ໃນການຈັດການຄຸ້ມຄອງກຸ່ມເອງ.

ນອກຈາກນັ້ນ, ປະຊາຊົນພາຍໃນທ້ອງຖິ່ນສ່ວນຫຼາຍມີຄວາມສົນໃຈທີ່ຈະເຂົ້າຮ່ວມຝຶກອົບຮົມ ຫຼື ກິດຈະກຳການສ້າງຄວາມອາດສາມາດເປັນຕົ້ນແມ່ນ: ກິດຈະກຳສົ່ງເສີມປູກຝັງ ຫຼື ລ້ຽງສັດ, ການຈັດການຄຸ້ມຄອງຊັບພະຍາກອນທຳມະຊາດ, ເພີ່ມຈຳນວນກິດຈະກຳ ການຜະລິດເພື່ອເປັນການສ້າງລາຍຮັບເຂົ້າສູ່ຄອບຄົວ. ເພື່ອເປັນການສົ່ງເສີມກິດຈະກຳດັ່ງກ່າວນັ້ນໃຫ້ບັນລຸຜົນ, ຊາວກະ

ສິກອນຕ້ອງໄດ້ມີການຈັດຕັ້ງ ເຂົ້າເປັນກຸ່ມຕ່າງໆ ເພື່ອໃຫ້ກາຍເປັນກຸ່ມເປົ້າໝາຍສຶກສາໃຫ້ແກ່ນັກວິຊາການໂຄງການ. ຫຼັງຈາກນັ້ນ, ບັນດາກຸ່ມເຫຼົ່າ ນັ້ນຈະເປັນຜູ້ຈັດຕັ້ງປະຕິບັດກິດຈະກຳທີ່ໄດ້ຮັບການສະໜັບສະໜູນຈາກທາງໂຄງການ ເປັນຕົ້ນແມ່ນ: ການຄຸ້ມຄອງກອງທຶນໝູນວຽນຂອງບ້ານ, ທະນາຄານເຂົ້າ, ການຄຸ້ມຄອງການນຳໃຊ້ນ້ຳ, ການປູກຝັງ, ລ້ຽງສັດ, ເກັບເຄື່ອງປ່າຂອງດົງ ແລະ ອື່ນໆ. ກຸ່ມຖືວ່າເປັນເຄື່ອງມື ທີ່ນຳໄປສູ່ຂະບວນການຖ່າຍທອດທາງດ້ານເຕັກໂນໂລຢີ ໃນຮູບແບບດັ້ງເດີມ ໂດຍທາງຫ້ອງການສົ່ງເສີມກະສິກຳ ແລະ ປ່າໄມ້ເມືອງໄດ້ຖືກມອບໝາຍໃຫ້ຮັບຜິດຊອບຊີ້ນຳບັນດາກຸ່ມຕ່າງໆ ແລະ ພ້ອມທັງສືບຕໍ່ຈັດຕັ້ງປະຕິບັດວຽກງານພາຍຫຼັງສິ້ນສຸດໂຄງການ.

ປະເດັນຄວາມຍືນຍົງ ຂອງກຸ່ມເຫຼົ່ານັ້ນຈະເຂົ້າມາກ່ຽວຂ້ອງ ຫຼັງຈາກສຸມການລົງທຶນທາງດ້ານລະບົບການເງິນ ແລະ ຊັບພະຍາກອນມະນຸດ ແລ້ວເຮັດໃຫ້ການດຳເນີນງານຂອງກຸ່ມຖືກປະລະ. ເນື່ອງຈາກວິຊາການສົ່ງເສີມ ຍັງຂາດການພົວພັນກັບຂັ້ນເທິງ ແລະ ຮາກຖານດ້ວຍສາເຫດຍ້ອນຂາດປັດໄຈທາງດ້ານການເງິນ (ບໍ່ມີງົບປະມານພຽງພໍທີ່ຈະຈ່າຍຄ່ານ້ຳມັນລົດຈັກໃຫ້ພະນັກງານລົງຮາກຖານ). ນອກຈາກນີ້, ຊັບພະຍາກອນມະນຸດຍັງຂາດທັກສະໃນການຄິດຄົ້ນແນວຄິດໃໝ່ໃນຂະບວນການຮຽນຮູ້, ຂອງກຸ່ມຊາວກະສິກອນ ເນື່ອງຈາກພາກສ່ວນທີ່ກ່ຽວຂ້ອງ ທີ່ໄດ້ຈັດຕັ້ງປະຕິບັດງານໂດຍທົ່ວໄປແລ້ວ ລ້ວນແຕ່ໄດ້ຮັບຄວາມຮູ້ມາຈາກໂຄງການຕ່າງໆ ແຕ່ເມື່ອຫຼັງຈາກທີ່ທາງໂຄງການສິ້ນສຸດລົງ ພັດເຮັດໃຫ້ຄວາມຮັບຮູ້ຂອງເຂົາເຈົ້າເຫຼົ່ານັ້ນລຶດລົງນຳ. ຊຶ່ງທັງໝົດນັ້ນ, ໄດ້ເຮັດໃຫ້ການດຳເນີນກິດຈະກຳຂອງກຸ່ມ ໄດ້ຮັບການປະຕິບັດທີ່ບໍ່ຕໍ່ເນື່ອງ.

## 5.2 ກຸ່ມສິນເຊື່ອ ແລະ ອອມຊັບ

ມີພຽງແຕ່ກຸ່ມຈຳນວນໜຶ່ງ ເທົ່ານັ້ນທີ່ສືບຕໍ່ລະດົມທຶນ ເພື່ອເຮັດກຸ່ມຂອງຕົນມີຄວາມຍືນຍົງພາຍຫຼັງທີ່ໂຄງການຊ່ວຍເຫຼືອສິ້ນສຸດລົງເປັນຕົ້ນແມ່ນ: ກອງທຶນໝູນວຽນທີ່ປະກອບດ້ວຍກຸ່ມອອມຊັບ ແລະ ສິນເຊື່ອ (www.microfinancelaop-dr.org), ທະນາຄານເຂົ້າ (Datta, 2007) ຫຼືທະນາຄານສັດ (Ficthtl and Scoizec, 2005) ແລະ ອື່ນໆ. ຈາກການປະເມີນຜົນເຫັນໄດ້ວ່າຍັງມີຫຼາຍໆໂຄງການ ໄດ້ບັນຈຸເອົາກິດຈະກຳການອອມຊັບ ແລະ ສິນເຊື່ອ ຫຼື ເອົາພຽງແຕ່ກິດຈະກຳການເງິນຈຸລະພາກໂດຍເຂົ້າໃຈວ່າການລະດົມທຶນແມ່ນປັດໄຈຫຼັກທີ່ເຮັດໃຫ້ການຈັດຕັ້ງວຽກງານໃດໜຶ່ງເກີດດອກອອກຜົນ ແລະ ທັງເປັນການສ້າງລາຍຮັບເຂົ້າສູ່ຄອບຄົວ. ຫາກເມື່ອຖາມເຖິງສາເຫດທີ່ເຮັດໃຫ້ສະມາຊິກ ຕັດສິນໃຈເຂົ້າຮ່ວມກຸ່ມນັ້ນ ແມ່ນຍ້ອນສາເຫດຫຍັງ ? ຄຳຕອບກໍ່ຄື "ສາມາດເຂົ້າເຖິງສິນເຊື່ອ" ຊຶ່ງເປັນປັດໄຈຫຼັກ ແລະ ເຫດຜົນຕໍ່ມາແມ່ນ, "ຕ້ອງການຮຽນຮູ້ບົດຮຽນອັນໃໝ່".

ລັດຖະບານໄດ້ສະໜອງການເງິນຈຸລະພາກໃນທົ່ວປະເທດກວມອັດຕາ 23%, ໃນຂະນະທີ່ອົງການຈັດຕັ້ງມະຫາຊົນກວມອັດຕາ 25%, ບັນດາທະນາຄານຕ່າງໆ ກວມອັດຕາ 19% ແລະ ບັນດາໂຄງການຕ່າງໆກວມອັດຕາ 33% (ດາລາຈັນທະລາ, 2006). ລະບົບທະນາຄານໄດ້ປ່ອຍທຶນສິນເຊື່ອອອກສູ່ເຂດຊົນນະບົດໃນຂອບເຂດຈຳກັດ. ຊຶ່ງຜູ້ທີ່ປ່ອຍເງິນກູ້ແມ່ນອາໄສສາຍພົວພັນທາງຍາດພີ່ນ້ອງເທົ່ານັ້ນ ໂດຍບໍ່ໄດ້ປ່ອຍໃຫ້ປະຊາຊົນທົ່ວໄປ (EDC, 2002) ສຳລັບວິທີການອອມຊັບຂອງປະຊາຊົນ ໃນເຂດຊົນ

ນະບົດແມ່ນຈະຊື້ເປັນວັດຖຸມີຄ່າ ແລະ ສັດລ້ຽງຈຳນວນໜຶ່ງໄວ້ ຫຼື ທ້ອນເງິນໄວ້ເອງພາຍ ໃນເຮືອນ. ດັ່ງທີ່ຮູ້ກັນແລ້ວວ່າ, ແມ່ຍິງເປັນຜູ້ທີ່ທ້ອນເງິນໄດ້ດີທີ່ສຸດ ແລະ ເປັນຜູ້ຈັດການຄຸ້ມຄອງລາຍຈ່າຍພາຍໃນຄອບຄົວ. ດັ່ງນັ້ນ, ຜູ້ຍິງຈຶ່ງມີສ່ວນຮ່ວມໃນກິດຈະກຳການອອມຊັບ ແລະ ສິນເຊື່ອຂອງບ້ານ. ອີງຕາມເມື່ອກ່ອນສະຫະພັນແມ່ຍິງລາວເປັນຜູ້ສະໜອງສິນເຊື່ອຈຳນວນຫຼາຍໃຫ້ແກ່ຊາວກະສິກອນ ຊຶ່ງລວມມີຜູ້ຮັບຜົນປະໂຫຍດທັງໝົດ 200.000 ກວ່າຄົນ (ດາລາຈັນທະລາ, 2004). ດັ່ງນັ້ນ, ໃນກໍລະນີທີ່ກຸ່ມສິນເຊື່ອພົບບັນຫາ ຫຼື ມີການຂັດແຍ່ງພາຍໃນກຸ່ມ ທາງຄະນະກຸ່ມຈະເຂົ້າໄປພົວພັນນຳສະຫະພັນແມ່ຍິງເມືອງເພື່ອມາໄກ່ເກ່ຍເປັນຕົ້ນແມ່ນ: ບັນຫາຂໍ້ຫຍຸ້ງຍາກຂັດຂ້ອງໃນການຄຸ້ມຄອງກອງທຶນໃນເວລາທີ່ສະມາຊິກສົ່ງເງິນຕົ້ນທຶນໃຫ້ກຸ່ມຊັກຊ້າ ແລະ ອື່ນໆ.

ໃນຊ່ວງປີ 1996, ອີງຕາມດຳລັດວ່າດ້ວຍສະຫະກອນສິນເຊື່ອ ໄດ້ຖືກອານຸມັດຈາກລັດຖະບານທີ່ໄດ້ອະນຸຍາດ ໃຫ້ສະຫະກອນສິນເຊື່ອດຳເນີນທຸລະກິດຂະໜາດນ້ອຍ (CCSP) ພາຍໃຕ້ການຂຶ້ນທະບຽນ ກັບທະນາຄານແຫ່ງ ສປປລາວຢ່າງເປັນທາງການ. ຈົນມາເຖິງປີ 2008, ທະນາຄານແຫ່ງຊາດລາວ ໄດ້ອອກກົດລະບຽບໃໝ່ອີງຕາມການແຈ້ງການຂອງທ່ານນາຍົກລັດຖະມົນຕີວ່າດ້ວຍການຊີ້ນຳການເງິນຈຸລະພາກ (ເລກທີ 05/ນຍ, ລົງວັນທີ 4 ເມສາ 2007), ຊຶ່ງໄດ້ວາງລະບຽບໃນການສ້າງຕັ້ງ ແລະ ການດຳເນີນງານສະຫະກອນການເງິນທີ່ມີຊື່ເອີ້ນວ່າ: "ສະຫະພັນອອມຊັບ ແລະ ສິນເຊື່ອ" ເອກະສານດັ່ງກ່າວນີ້ໄດ້ຕອບສະໜອງ ໃຫ້ຂົງເຂດການຈັດຕັ້ງປະຕິບັດງານສະຫະກອນສິນເຊື່ອໄດ້ເປັນຢ່າງດີ. ເຖິງຢ່າງໃດກໍ່ຕາມ, ໃນຂະນະທີ່ຮ່າງນິຕິກຳ ດັ່ງກ່າວນີ້ກໍຍັງບໍ່ພຽງພໍທີ່ຈະເປັນຂົວຕໍ່ລະຫວ່າງສິນເຊື່ອທີ່ເປັນທາງການ (ທະນາຄານ) ກັບສິນເຊື່ອທີ່ບໍ່ເປັນທາງການ (ຜູ້ປ່ອຍເງິນກູ້) ໃນເຂດຊົນນະບົດຫ່າງໄກສອກຫຼີກ.

## 5.3 ກຸ່ມການຕະຫຼາດ ແລະ ປຸງແຕ່ງຜະລິດຕະພັນ

ກອງປະຊຸມໃຫ່ຍຜູ້ແທນທົ່ວປະເທດຂອງພັກປະຊາຊົນປະຕິວັດລາວໃນຄັ້ງວັນທີ 07 ມີນາ 2001ໄດ້ເສີມຂະຫຍາຍ"ເສດຖະກິດຂັ້ນພື້ນຖານຂອງປະຊາຊົນ ໂດຍເອົາໃຈໃສ່ສະຫະກອນການຜະລິດກະສິກຳ, ຫັດຖະກຳ ແລະ ການບໍລິການໂດຍຜ່ານນະໂຍບາຍທາງດ້ານການເງິນ, ສິນເຊື່ອ ແລະ ການຕະຫຼາດ" (ໜັງສືພິມວຽງຈັນທາມ, 2001). ລັດຖະບານແຫ່ງ ສປປລາວ ໄດ້ສະໜັບສະໜູນສົ່ງເສີມກິດຈະກຳການດຳເນີນທຸລະກິດທີ່ມີໜ້າທີ່ຮັບຜິດຊອບຕໍ່ສັງຄົມ (ວິສະຫະກິດກະສິກຳເອກະຊົນ ແລະ ສະຫະກອນ) ທີ່ຈະຊ່ວຍໃຫ້ກຸ່ມຊາວກະສິກອນທີ່ເຄີຍຖືກຂັດຂວາງໃນການມີສ່ວນຮ່ວມທາງດ້ານເສດຖະກິດໃນໄລຍະຜ່ານມາ, ອີງຕາມລັກສະນະທາງກາຍະພາບ ຫຼື ຄວາມສາມາດ ໃນການເຂົ້າເຖິງຕະຫຼາດສົ່ງເສີມອົງການຈັດຕັ້ງໃນເຂດຊົນນະບົດໃຫ້ມີຄວາມອາດສາມາດຄຸ້ມຄອງ ແລະ ບຳລຸງຮັກສາສາຍພົວພັນໃນການຂະຫຍາຍຕົວຂອງຕະຫຼາດ, ຮຽກຮ້ອງໃຫ້ມີການພິຈາລະນາເຖິງການສ້າງຄວາມອາດສາມາດໃຫ້ແກ່ທັງສອງດ້ານຂົວຕໍ່ທີ່ແຍກລະຫວ່າງກຸ່ມຊາວກະສິກອນ ແລະ ເສດຖະກິດການຕະຫຼາດເນື່ອງຈາກປະຊາຊົນທີ່ທຸກຍາກໃນເຂດຊົນນະບົດຫ່າງໄກສອກຫຼີກຍັງຂາດການສຶກສາ. ດັ່ງນັ້ນ, ຈຶ່ງຮຽກຮ້ອງໃຫ້ມີມາດຕະການສ້າງຄວາມເຊື່ອໝັ້ນ ແລະ ການສະໜັບສະໜູນໃນໄລຍະຍາວ.

ນອກຈາກນີ້, ວິສະຫະກິດກະສິກຳ ແລະ ສະຖາບັນສະຫະກອນທີ່ພວກເຂົາເຈົ້າ ຕ້ອງການເຂົ້າໄປຮ່ວມກໍ່ຍັງມີຄວາມຕ້ອງການມາດຕະການສ້າງຄວາມເຊື່ອໝັ້ນ ເພື່ອເຮັດໃຫ້ສະຖາບັນເຫຼົ່ານັ້ນສາມາດບັນລຸຜົນສຳເລັດ.

ອີງຕາມມະຕິຄຳສັ່ງຂອງລັດຖະບານ ແລະ ຈາກການສັງລວມບົດຮຽນ ໃນໄລຍະທີ່ຜ່ານມາຂອງບັນດາໂຄງການພັດທະນາຊົນນະບົດຕ່າງໆທີ່ມັກຈະຢຸດເຊົາຜະລິດສິນຄ້າທີ່ບໍ່ສາມາດຈຳໜ່າຍໄດ້. ແຕ່ກໍ່ມີຫຼາຍວິສະຫະກິດກະສິກຳ ທີ່ໄດ້ກຳເນີດຂຶ້ນທີ່ມີໜ້າທີ່ຮັບຜິດຊອບຕໍ່ສັງຄົມ ແລະ ມີຫຼາຍໂຄງການທີ່ໄດ້ຈັດຕັ້ງປະຕິບັດ ໂດຍໄດ້ຮັບການສະໜັບສະໜູນເສີມສ້າງຄວາມເຂັ້ມແຂງຂອງທຸລະກິດບໍລິການໃນເຂດທ້ອງຖິ່ນ (Box 2; Connell, 2005; Manivong et al., 2005; Foppes ແລະ Phommasane, 2006; Ledecq et al., 2006; Fullbrook, 2007). ການເຊື່ອມໂຍງຊາວກະສິກອນໄປສູ່ຕະຫຼາດ ໂດຍຜ່ານການພັດທະນາວິສະຫະກິດກະສິກຳ ທີ່ຄາດວ່າຈະເປັນການປະກອບສ່ວນໃຫ້ແກ່ການຫຼຸດຜ່ອນຄວາມທຸກຍາກຈາກການເພີ່ມຄວາມຫຼາກຫຼາຍຂອງແຫຼ່ງລາຍຮັບເຂົ້າສູ່ຄອບຄົວ, ໂດຍການປັບປຸງຄຸນນະພາບຂອງຜົນຜະລິດ ແລະ ມູນຄ່າເພີ່ມຂອງຜະລິດຕະພັນທີ່ຜ່ານຂະບວນການປຸງແຕ່ງ. ໃນເບື້ອງຕົ້ນວິສະຫະກິດກະສິກຳຈຳນວນໜຶ່ງ ໄດ້ກາຍເປັນຜູ້ບຸກເບີກໃນແຖວໜ້າເປັນຕົ້ນແມ່ນ "ຜະລິດຕະພັນຊາວກະສິກອນລາວ" "ເພື່ອນຊາວກະສິກອນໃນເຂດພູດອຍ", ໂຄງການ SADU ແລະ ໂຄງການ VECO-ບໍ່ແກ້ວ ເສັ້ນທາງໄປສູ່ອະນາຄົດຂອງສະຫະກອນແບບປະສົມປະສານ ທີ່ກວມເອົາກິດຈະກຳການຜະລິດ, ການປຸງແຕ່ງ ແລະ ການຕະຫຼາດ.

ໃນປີ 2004, ອີງຕາມການຈັດຕັ້ງປະຕິບັດວຽກງານຮວມກຸ່ມເພື່ອ "ການເຊື່ອມໂຍງຊາວກະສິກອນສູ່ຕະຫຼາດ", ທີ່ປະກອບດ້ວຍ 25 ສະຖາບັນ ແລະ ບັນດາໂຄງການຕ່າງໆທີ່ເປັນຜູ້ລິເລີ່ມເກັບກ່ຽວປະສົບການ. ການຈັດຕັ້ງປະຕິບັດວຽກງານຂອງກຸ່ມຕ່າງໆແມ່ນດຳເນີນໄປດ້ວຍຫຼາກຫຼາຍຮູບແບບພາຍໃຕ້ການຊີ້ນຳຂອງໂຄງການ. ບົດຮຽນທັກທີ່ຈະໄດ້ນຳສະເໜີ ຢ່າງລະອຽດໃນພາກຕໍ່ໜ້ານີ້ສາມາດສັງລວມໄດ້ຄືດັ່ງນີ້: ເພື່ອສູ້ຢັນກັບການແຂ່ງຂັນການດຳເນີນທຸລະກິດ, ວິສະຫະກິດກະສິກຳຈະຕ້ອງໄດ້ເອົາໃຈໃສ່ "ຕ່ອງໂສ້ການຕະຫຼາດ" ໂດຍຜ່ານພາກສ່ວນກຸ່ມ ທີ່ກ່ຽວຂ້ອງພາຍໃນທ້ອງຖິ່ນແທນທີ່ຈະສຸມໃສ່ແຕ່ຜູ້ຜະລິດພຽງຢ່າງດຽວ. ການດຳເນີນງານ ສະຫະກອນແມ່ນຈຳເປັນຕ້ອງໄດ້ເຮັດວຽກກັບກຸ່ມຊາວກະສິກອນເພື່ອຕອບສະໜອງຄວາມຮຽກຮ້ອງຕ້ອງການຂອງຕະຫຼາດທັງໃນຮູບການທັງດ້ານປະລິມານ ແລະ ຄຸນນະພາບ. ແຕ່ສິ່ງສຳຄັນທີ່ສຸດ, ກຸ່ມຊາວກະສິກອນຄວນຈະເປີດປະຕູສູ່ໂລກພາຍນອກດ້ວຍພວກເຂົາເອງເປັນຕົ້ນແມ່ນ: ການພັດທະນາຊຸມຊົນດ້ວຍວິທີການຂອງໂຄງການ SADU, ຕ່ອງໂສ້ການຕະຫຼາດອື່ນໆ (ພໍ່ຄ້າ ແລະ ຜູ້ປຸງແຕ່ງ), ການຜະລິດເປັນສິນຄ້າ (ຜະລິດຕະພັນຊາວກະສິກອນລາວ). ການຄຸ້ມຄອງການແປຮູບຈາກການດຳເນີນທຸລະກິດຄອບຄົວ ໄປສູ່ການດຳເນີນທຸລະກິດແບບວິສະຫະກິດກະສິກຳ, ມັນໄດ້ຮຽກຮ້ອງໃຫ້ຊາວກະສິກອນມີອຳນາດໃນການລິເລີ່ມຈັດຕັ້ງປະຕິບັດງານຮ່ວມກັບພາກສ່ວນທີ່ກ່ຽວຂ້ອງ ແລະ ການສະໜອງປັດໄຈການສະໜັບສະໜູນທາງສະພາບແວດລ້ອມອ້ອມຂ້າງເພື່ອສະດວກໃນການດຳເນີນທຸລະກິດ (ການຍົກເວັ້ນພາສີ, ຄວບຄຸມຕິດຕາມສັນຍາທຳການຜະລິດ, ການເສີມສ້າງຄວາມເຂັ້ມແຂງຂອງກົນໄກ ແລະ ການປ້ອງກັນບໍ່ໃຫ້ເຮັດຜິດກົດໝາຍ).

## 6. ເຮັດແນວໃດຈຶ່ງຈະປ່ຽນກຸ່ມຊາວກະສິກອນໄປເປັນສະຫະກອນໄດ້? ການສ້າງເສດຖະກິດທີ່ບໍ່ເອື່ອຍອີງສັງຄົມ

ຈາກບົດຮຽນ ແລະ ປະສົບການຕ່າງໆຂອງກຸ່ມຊາວກະສິກອນທີ່ພວກເຮົາໄດ້ຖອດຖອນມານັ້ນສາມາດຕອບຄຳຖາມໃນການສຶກສາຄົ້ນຄວ້າທີ່ປະກອບກັບປະສົບການ ລິເລີ່ມຈັດຕັ້ງປະຕິບັດວຽກງານຂອງບັນດາໂຄງການຕ່າງໆ ທັງພາຍໃນ ແລະ ຕ່າງປະເທດຈຳນວນໜຶ່ງ. ຊຶ່ງພວກເຂົາໄດ້ຊີ້ໃຫ້ເຫັນສິ່ງທີ່ທ້າທາຍໃນການຫັນປ່ຽນກຸ່ມຊາວກະສິກອນ ໄປເປັນສະຫະກອນກະສິກຳ ໂດຍໄດ້ຄົ້ນພົບກົນໄກຈຳນວນໜຶ່ງ ທີ່ສາມາດຮັບຮອງໄດ້ວ່າການຈັດຕັ້ງວຽກງານ ສະຫະກອນໃນ ສປປລາວໃນຕໍ່ໜ້າຈະປະສົບຜົນສຳເລັດໄດ້ກໍ່ຕໍ່ເມື່ອ.

### 6.1 ການເຂົ້າເຖິງການເງິນທີ່ເປັນສິ່ງຈູງໃຈຫຼັກໃຫ້ຊາວກະສິກອນເຂົ້າຮ່ວມກຸ່ມ

ການລະດົມທຶນໃນການດຳເນີດທຸລະກິດກະສິກຳແມ່ນປັດໄຈຫຼັກທີ່ເຮັດໃຫ້ກຸ່ມຊາວກະສິກອນປະສົບຜົນສຳເລັດ. ເຖິງແມ່ນວ່າ, ສະຫະກອນບໍ່ແມ່ນອີງການເພື່ອການກຸສົນ ເນື່ອງຈາກຄວາມຍືນຍົງຂອງພວກເຂົາ ແມ່ນອີງຕາມຄວາມອາດສາມາດໃນການເຮັດໃຫ້ມີລາຍໄດ້ ທາງດ້ານການເງິນເພີ່ມຂຶ້ນໃນເງື່ອນໄຂສະພາບແວດລ້ອມອ້ອມຂ້າງທີ່ມີການຊ່ວງຊີງກັນດຳເນີນທຸລະກິດ. ບາງໂຄງການຊຸກຍູ້ສົ່ງເສີມແມ່ນຈຳເປັນຕ້ອງໄດ້ສ້າງກຸ່ມຜູ້ຜະລິດໃນລະດັບຄອບຄົວ ເພື່ອໃຫ້ເຂົ້າເຖິງການບໍລິການຕ່າງໆຈາກທາງໂຄງການ. "ກຸ່ມທີ່ໄດ້ຜົນປະໂຫຍດ" ແມ່ນກຸ່ມທີ່ຢູ່ຍືນຍົງ ໄປຈົນເຖິງຊ່ວງໄລຍະສຸດທ້າຍຂອງໂຄງການເພາະອີງຕາມເງື່ອນໄຂ ແລະ ກິດຈະກຳການດຳເນີນງານ ຂອງທາງໂຄງການໃນການສະໜັບສະໜູນການເງິນໃຫ້ແກ່ເຂົາເຈົ້າ. ໂດຍທົ່ວໄປແລ້ວກຸ່ມເຫຼົ່ານີ້ ແມ່ນຈະຄ່ອຍໆສະຫຼາຍຕົວໄປໃນຊ່ວງໄລຍະທ້າຍຂອງໂຄງການ. ດັ່ງນັ້ນ, ເຫດຜົນທີ່ເຮັດໃຫ້ຫຼາຍໆ ໂຄງການມີຄວາມຫ່ວງໄຍຕໍ່ຄວາມຍືນຍົງໃນການດຳເນີນງານຂອງກຸ່ມຈຶ່ງໄດ້ຈັດຕັ້ງກຸ່ມສິນເຊື່ອແລະກຸ່ມອອມຊັບຂຶ້ນດ້ວຍຄວາມຫວັງທີ່ພວກເຂົາຈະສາມາດສະໜັບສະໜູນກິດຈະກຳ ເພື່ອປັບປຸງຊີວິດການ ເປັນຢູ່ຂອງປະຊາຊົນໃນທ້ອງຖິ່ນໃຫ້ດີຂຶ້ນໃນໄລຍະທີ່ທາງໂຄງການຍັງຈັດຕັ້ງປະຕິບັດວຽກງານຢູ່. ຈາກຫຼາຍປະສົບການທີ່ກ່າວມານັ້ນ ໄດ້ສະແດງໃຫ້ເຫັນວ່າຂັ້ນຕອນລິເລີ່ມກິດຈະກຳການເງິນຈຸລະພາກໂດຍສະເພາະ ໃນເຂດບ້ານທີ່ທຸກຍາກ ແລະ ປະຊາຊົນກໍ່ຂາດການສຶກສາ, ສິ່ງສຳຄັນແມ່ນຕ້ອງເລີ່ມຕົ້ນ ດ້ວຍເງິນຈຳນວນໜ້ອຍໂດຍສະເພາະແມ່ນຄວນເລີ່ມ ຈາກກິດຈະກຳການອອມຊັບ. ເນື່ອງຈາກປະຊາຊົນ ຈະມີຄວາມຮູ້ສຶກສູງຕໍ່ໜ້າທີ່ຄວາມຮັບຜິດຊອບຖ້າຫາກພວກເຂົາຮູ້ວ່າພວກເຂົາເຈົ້າມີສ່ວນຮ່ວມໃນການຄຸ້ມຄອງເງິນຂອງເຂົາເຈົ້າເອງ. ນອກຈາກນີ້ແລ້ວ, ໄລຍະການລິເລີ່ມຂະບວນການຮຽນຮູ້ ແມ່ນມີຄວາມຈຳເປັນທີ່ຈະໃຊ້ເວລາຍາວ ເພື່ອສ້າງຄວາມເຂັ້ມແຂງພາຍໃນກຸ່ມກ່ອນທີ່ຈະຜັນຂະຫຍາຍກວ້າງອອກສູ່ສະມາຊິກຫຼືຜັນຂະຫຍາຍງົບປະມານໂດຍຜ່ານເງິນກູ້/ທຶນຊ່ວຍເຫຼືອລ້າຈາກທາງໂຄງການ ຫຼື ຈາກສະຖາບັນການເງິນໃນລະບົບ.

ທະນາຄານໂລກ ກໍ່ຍັງໄດ້ທົບທວນຄືນເຖິງ "ການກຳເນີດກຸ່ມສິນເຊື່ອ ແລະ ອອມຊັບທີ່ບໍ່ຍືນຍົງພາຍໃຕ້ກອງທຶນພັດທະນາບ້ານ, ການລົງທຶນໃນຂັ້ນບ້ານ ເພື່ອຊ່ວຍເຫຼືອຜູ້ທຸກຍາກ ແລະ ເກືອບ

ເວົ້າໄດ້ວ່າທຸກໂຄງການທີ່ແນໃສ່ປັບປຸງຊີວິດການເປັນຢູ່ຂອງປະຊາຊົນທຸກຍາກ ຢູ່ໃນເຂດພາກເໜືອຂອງສປປລາວ" (ທະນາຄານໂລກ, 2008). ການສະໜອງສິນເຊື່ອທີ່ຍືນຍົງ ໃຫ້ແກ່ຊາວກະສິກອນທີ່ເຮັດການຜະລິດພໍກຸ້ມກິນ, ຜູ້ທີ່ບໍ່ສາມາດເຂົ້າເຖິງຕະຫຼາດ ແລະ ຜູ້ທີ່ບໍ່ໄດ້ຢູ່ໃນລະບົບການໃຊ້ເງິນຕາກໍ່ບໍ່ມີຄວາມໝາຍຫຍັງ. ເນື່ອງຈາກປະຊາຊົນທີ່ທຸກຍາກເຫຼົ່ານີ້ແມ່ນຕົກຢູ່ໃນຫຼຸມພາງຄວາມເປັນໜີ້ຢ່າງງ່າຍດາຍ. ດັ່ງນັ້ນ, ບູລິມະສິດສະຫະກອນການເງິນຈຸລະພາກຄວນຈະຮັບໃຊ້ພົນລະເມືອງຈຳນວນ 30% ຂອງພົນລະເມືອງລາວທັງໝົດ (70% ແມ່ນຊາວກະສິກອນຜູ້ຜະລິດຂະໜາດນ້ອຍ) ຕົວຢ່າງເຊັ່ນ: ຜູ້ປະກອບການດຳເນີນທຸລະກິດໃນຕົວເມືອງ ແລະ ຊານເມືອງທີ່ເປັນຜູ້ນຳຕະຫຼາດເຂົ້າມາ.

### 6.2 ການຮັກສາອັດຕາສ່ວນຂອງສັງຄົມທີ່ປະສົມປະສານເປັນປັດໄຈທີ່ເຮັດໃຫ້ວຽກງານສະຫະກອນປະສົບຜົນສຳເລັດ

ຕາມຄວາມເປັນຈິງແລ້ວ, ຖານະຄອບຄົວຮັ່ງມີ ຫຼື ທຸກຍາກມີແນວໂນ້ມທີ່ຈະແຍກອອກດ້ວຍຕົວມັນເອງ, ຈາກການເຂົ້າເປັນສະມາຊິກພາຍໃນກຸ່ມ. ມີຫຼາຍໆຄອບຄົວທຸກຍາກບໍ່ໄດ້ຖືກຄັດເລືອກເຂົ້າເປັນສະມາຊິກພາຍໃນກຸ່ມສິນເຊື່ອ-ອອມຊັບ ຫຼື ຖືກກີດກັນໃນການເຂົ້າເຖິງເງິນກູ້ ເພາະເຂົາເຈົ້າ ເຫຼົ່ານັ້ນມີຄວາມສ່ຽງສູງ ໃນການຊົດໃຊ້ເງິນຄືນໃຫ້ທາງກຸ່ມ. ດັ່ງນັ້ນ, ສະມາຊິກພາຍໃນກຸ່ມສິນເຊື່ອ-ອອມຊັບຈະມີແຕ່ຄອບຄົວທີ່ມີຖານະປານກາງ. ສຳລັບຄອບຄົວທີ່ທຸກຍາກມີແນວໂນ້ມທີ່ຈະກູ້ຢືມເງິນ ໃນກໍລະນີທີ່ຈຳເປັນຮີບດ່ວນພາຍໃນຄອບຄົວ ແຕ່ເນື່ອງຈາກຄວາມອາດສາມາດໃນການຊົດໃຊ້ເງິນຄືນຍັງຕ່ຳ ແລະ ເງິນກູ້ທີ່ໄດ້ມານັ້ນບໍ່ໄດ້ໃຊ້ ເຂົ້າໃນການລົງທຶນທາງດ້ານການຜະລິດ ຈະມີກໍ່ມີພຽງແຕ່ເຮັດໃນໄລຍະທຳອິດເທົ່ານັ້ນ. ນອກຈາກນີ້, ການຂາດສິ່ງຄ້ຳປະກັນ (ໃບຕາດິນ, ຊັບສິນ ຕ່າງໆ) ກໍ່ເຮັດໃຫ້ຂາດຄວາມເຊື່ອໝັ້ນຈາກທາງຄະນະກຸ່ມ. ກົງກັນຂ້າມກັບຄອບຄົວທີ່ຮັ່ງມີ ພັດບໍ່ຕ້ອງການເຂົ້າເປັນສະມາຊິກພາຍໃນກຸ່ມ ເນື່ອງຈາກພວກເຂົາຖືວ່າຈຳນວນເງິນກູ້ມີໜ້ອຍໂພດ ບໍ່ພຽງພໍກັບກິດຈະກຳທີ່ຈັດຕັ້ງປະຕິບັດ ແລະ ເງິນປັນຜົນກໍ່ຕ່ຳເຊັ່ນດຽວກັນ. ສຳລັບຄອບຄົວທີ່ທຸກຍາກ ທີ່ທ້ອນເງິນໃນກຸ່ມອອມຊັບມີວົງເງິນໜ້ອຍ ກໍ່ຈະໄດ້ຮັບວົງເງິນກູ້ໜ້ອຍເຊັ່ນດຽວກັນເຮັດໃຫ້ວົງເງິນກູ້ທີ່ໄດ້ມາບໍ່ພຽງພໍທີ່ຈະໄປປະຕິບັດກິດຈະກຳ ຕາມຈຸດປະສົງທີ່ວາງໄວ້. ຊຶ່ງກິດຈະກຳການອອມຊັບນັ້ນ ແມ່ນເປັນໄປຢ່າງຊັກຊ້າເນື່ອງຈາກຕົ້ນທຶນໜ້ອຍ ແຕ່ອັດຕາດອກເບ້ຍສູງຮັບໃຊ້ໃຫ້ແກ່ການການລົງທຶນຂະໜາດໃຫຍ່ເປັນຕົ້ນແມ່ນ: ການລ້ຽງສັດໃຫຍ່ ຫຼື ການປູກພືດຢືນຕົ້ນເປັນການສ້າງຄວາມດຶງດູດໃຫ້ແກ່ຄອບຄົວຊາວກະສິກອນທີ່ມີຖານະຮັ່ງມີ.

ອີກດ້ານໜຶ່ງ, ອັດຕາດອກເບ້ຍຕ່ຳກໍ່ພາໃຫ້ຄວາມຕ້ອງການກູ້ຢືມຫຼາຍກວ່າການຕອບສະໜອງຂອງກອງທຶນ, ເປັນການກົດດັນຄວາມຍືນຍົງຂອງກຸ່ມສິນເຊື່ອ ແລະ ອອມຊັບ. ການປ່ອຍສິນເຊື່ອແບບໝູນວຽນ ກໍ່ຈະເປັນການເພີ່ມຄວາມສ່ຽງໃນການໃຊ້ອຳນາດປ່ອຍເງິນກູ້ ຂອງສາຍຍາດພີ່ນ້ອງ. ເຊັ່ນດຽວກັນກັບຄອບຄົວ ທີ່ທຸກຍາກທີ່ຄາດວ່າຈະມີບັນຫາທີ່ໜັກໜ່ວງໃນການສົ່ງເງິນກູ້, ມັນກໍຄ້າຍຄືກັບວ່າທຶນການຊ່ວຍເຫຼືອຈະມີຜົນກະທົບຫຼາຍກວ່າເງິນກູ້ຢູ່ເຂດຊົນນະບົດຫ່າງໄກສອກຫຼີກໂດຍສະເພາະທາງພາກເໜືອຂອງລາວໃນເຂດທີ່ມີການຄຸ້ມຄອງ ລະບົບການເງິນຕ່ຳ ແລະ ການລົງຕິດຕາມກວດກາ ທີ່ເປັນການສິ້ນ

ເບື້ອງງົບປະມານ (World Bank, 2008). ດັ່ງນັ້ນ, ທາງເລືອກການເງິນຈຸລະພາກ ຄວນຈັດສັນໃຫ້ດຸ່ນດ່ຽງກັນລະຫວ່າງ ຄອບຄົວທີ່ມີລາຍຮັບຕ່ຳ, ປານກາງ ແລະ ຫຼາຍ. ການຊ່ວຍເຫຼືອລ້າຄວນຈະມີການບໍລິຫານ ໃນເຂດຫ່າງໄກສອກຫຼີກ, ໃນຂະນະທີ່ການດຳເນີນງານລະບົບສິນເຊື່ອເອກກະຊົນທີ່ມີອັດຕາດອກເບ້ຍສູງ ທີ່ສາມາດປະສົບຜົນສຳເລັດຢູ່ໃນເຂດຊານເມືອງ (ສະຫະກອນສິນເຊື່ອເພື່ອສົ່ງເສີມທຸລະກິດຂະໜາດນ້ອຍ CCSP, ທະນາຄານສະຫະກອນນາຊາຍທອງ). ສຳລັບສອງລະບົບດັ່ງກ່າວນີ້ໄດ້ມີຫຼາຍຮູບແບບການຈັດການພາຍໃນທ້ອງຖິ່ນອີງຕາມສະພາບຄວາມເປັນຈິງພາຍໃນທ້ອງຖິ່ນທີ່ມີການຕໍ່ລອງເຈລະຈາກັບຊຸມຊົນພາຍໃນບ້ານ.

## 6.3 ປັດຈຸບັນ, ໃນຊຸມຊົນຂອງບ້ານຍັງມີການລະດົມທຶນເພື່ອສ້າງກອງທຶນຢູ່ບໍ່ ?

ເປັນທີ່ກະຈ່າງແຈ້ງແລ້ວວ່າ ການກຳເນີດເກີດຂຶ້ນຂອງກຸ່ມ ທີ່ລິເລີ່ມຈາກປັດໄຈພາຍໃນຕົວມັນເອງນັ້ນ (ຈາກຄວາມຕ້ອງການຂອງສະມາຊິກ) ແມ່ນມີໂອກາດດີທີ່ຈະຢູ່ລອດຫຼາຍກວ່າກຸ່ມທີ່ໄປກຳນົດໃຫ້ເກີດຂຶ້ນຈາກປັດໄຈພາຍນອກ (ທີ່ໄດ້ຮັບການບັນຊາຈາກທາງໂຄງການ). ຊຶ່ງເປັນສິ່ງສຳຄັນເຊັ່ນດຽວກັນທີ່ຈະຕີລາຄາ ແລະ ເອີ້ນວ່າອັນໃດແມ່ນ"ຊຸມຊົນພາຍໃນບ້ານ"ທີ່ສາມາດສະໜັບສະໜູນການລວມຕົວຂອງກຸ່ມຊາວກະສິກອນ ແລະ ເພື່ອກ້າວໄປເຖິງສະຫະກອນໃນອານາຄົດ (Olson, 1973). ໃນປີ 2006 ໄດ້ມີການອະທິບາຍແນວຄວາມຄິດຂອງຊຸມຊົນ ພາຍໃນບ້ານທີ່ບໍ່ແມ່ນເປັນສະຖາບັນຄົງທີ່ແຕ່ເປັນຂະບວນການຢ່າງຕໍ່ເນື່ອງ. "ໂຄງຮ່າງສ້າງຕັ້ງບ້ານ" ທີ່ໄດ້ກຳນົດຮູບຮ່າງລັກສະນະຂອງຊຸມຊົນ ແລະ ການກຳນົດຄວາມອາດສາມາດເພື່ອກ້າວໄປເຖິງການດຳເນີນງານຂອງສະຫະກອນ.

ອົງການຈັດຕັ້ງຂອງຊາວກະສິກອນ ໄດ້ຖືກຮຽກຮ້ອງຂຶ້ນມາ ເພື່ອປັບປຸງລະບົບການຜະລິດກະສິກຳຂອງຊຸມຊົນໃຫ້ເຂັ້ມແຂງ. ນອກຈາກນີ້, ຄວາມສາມັກຄີພາຍໃນກຸ່ມກໍ່ໄດ້ສະທ້ອນໃຫ້ເຫັນເຖິງຄວາມສາມັກຄີ ຂອງສະມາຊິກທັງໝົດພາຍໃນກຸ່ມ,ຄວາມໜຽວແໜ້ນຂອງກຸ່ມທີ່ສ້າງຂຶ້ນຈາກການພົວພັນຊຶ່ງກັນ ແລະ ກັນຢ່າງເປັນປົກກະຕິລະຫວ່າງສະມາຊິກ. ປະຫວັດຄວາມເປັນມາໄດ້ຖືກຮັບຮອງເອົາເປັນກົດລະບຽບ, ບັນທັດຖານໃນທາງກວ້າງຂອງສັງຄົມ ແລະ ການລົງໂທດເພື່ອດັດສົມການປະພຶດກາຍເປັນທຶນ ຫຼື ຊັບສິນທີ່ສຳຄັນຂອງສັງຄົມ. ຄວາມບໍ່ເປັນລະບຽບໃນບ້ານທາງດ້ານຊັບສິນ/ທຶນຮອນ ທີ່ສາມາດສັງເກດເຫັນໄດ້ໃນບ້ານທີ່ມີການຕັ້ງຖິ່ນຖານບ້ານເຮືອນໃໝ່ ຫຼື ບ້ານປະສົມທີ່ມີການຍົກຍ້າຍ ຄົວເຮືອນມາຢູ່ໃໝ່ຢ່າງຕໍ່ເນື່ອງ. ຜົນສຸດທ້າຍ, ໂອກາດທີ່ປະສົບຜົນສຳເລັດຂອງກຸ່ມຊາວກະສິກອນ ແລະ ຮູບແບບພື້ນຖານກິດຈະກຳ ພາຍໃນຊຸມຊົນແມ່ນຍັງຕ່ຳຢູ່ໃນບ້ານທີ່ມີການຕັ້ງຖິ່ນຖານບ້ານເຮືອນໃໝ່ (ນະໂຍບາຍລວມຈາກກໍລະນີສຶກສາຢູ່ເມືອງຊຳເໜືອ).

ທ່ານ Connell (2005) ໄດ້ຊີ້ໃຫ້ເຫັນເຖິງຂໍ້ຄົງຄ້າງອື່ນໆ ຕໍ່ກັບການພັດທະນາວິສະຫະກິດກະສິກຳ ຢູ່ໃນເຂດຊົນນະບົດຫ່າງໄກສອກຫຼີກໂດຍໄດ້ຜັນຂະຫຍາຍຍຸດທະສາດພັດທະນາຊີວິດການເປັນຢູ່ ຕົວຢ່າງເຊັ່ນ: ນຳໃຊ້ວັດຖຸດິບນຳເຂົ້າໜ້ອຍກໍ່ຈະເຮັດໃຫ້ໄດ້ຮັບຜົນກຳໄລ ແລະ ມີມູນຄ່າການຜະລິດຕ່ຳ. ແຕ່ສຳລັບບ້ານທີ່ຢູ່ຫ່າງໄກຈາກຊຸມຊົນ ແມ່ນມີທ່າອ່ຽງເພິ່ງພາອາໄສຊຶ່ງ

ກັນ ແລະ ກັນເປັນຕົ້ນແມ່ນການແລກປ່ຽນຜົນຜະລິດສ່ວນເກີນນຳກັນ ເພື່ອພໍລິໂພກພາຍໃນຄອບຄົວພາຍຫຼັງສຳເລັດ ການເກັບກ່ຽວແທນທີ່ຈະເປັນການຄ້າຂາຍໃຫ້ກັນ. ການຫັນປ່ຽນໄປສູ່ການຜະລິດຮູບແບບວິສະຫະກິດ ແມ່ນພົວພັນເຖິງການປ່ຽນແປງຄວາມຮັບຮູ້ກ່ຽວກັບ: (i) ການເຮັດກະເສດສຸມທີ່ມີຄວາມຈຳ ເປັນໃນການເພີ່ມຜົນຜະລິດໃຫ້ສູງຂຶ້ນ ແລະ ນຳໃຊ້ພື້ນທີ່ໃຫ້ເກີດປະສິດຕິພາບ, (ii) ຜົນຜະລິດທີ່ໄດ້ຮັບພາຍຫຼັງເກັບກ່ຽວ ແມ່ນຂາຍເພື່ອເປັນການເພີ່ມລາຍຮັບ ໃຫ້ແກ່ຄອບຄົວແທນທີ່ຈະເປັນການແລກປ່ຽນກັນລ້າໆພາຍໃນຊຸມຊົນ. ດັ່ງນັ້ນ, ການສ້າງຄວາມສາມັກຄີພາຍໃນ ແລະການເຊື່ອມສານກັນທາງດ້ານປະເພນີແມ່ນຮຽກຮ້ອງໃຫ້ພັດທະນາ ຫຼື ທົບທວນຄືນເຖິງຮູບແບບໃໝ່ຂອງ "ໂຄງສ້າງພື້ນຖານຂອງຊຸມຊົນ". ຕົວຢ່າງໂຄງການເຫຼົ່ານີ້ສາມາດສ້າງຊຸມຊົນໄດ້ຄືດັ່ງທີ່ກ່າວມານັ້ນບໍ່ຖ້າຫາກໂຄງການສາມາດຂຸດຄົ້ນທ່າແຮງບົ່ມຊ້ອນຂອງທຶນຮອນ/ຊັບສິນທາງສັງຄົມ, ເລີ່ມສ້າງຈາກກຸ່ມຄົນຈຳນວນໜ້ອຍທີ່ດຳເນີນທຸລະກິດສ່ວນຕົວ (ໂຄງການ VECO-ບໍ່ແກ້ວ) ຫຼື ເປັນການຜູກມັດກັບພາກສ່ວນທີ່ກ່ຽວຂ້ອງທາງດ້ານຕ່ອງໂສ້ການຕະຫຼາດໃນລະດັບກຸ່ມບ້ານ. ຈາກບົດຮຽນໃນການດຳເນີນງານຂອງບັນດາໂຄງການຕ່າງໆທີ່ໄດ້ຈັດຕັ້ງປະຕິບັດພາຍໃນຊຸມຊົນຕັ້ງແຕ່ອາດີດຈົນເຖິງປັດຈຸບັນ ແມ່ນມີຄວາມເປັນອັນໜຶ່ງອັນດຽວຂອງຊຸມຊົນດ້ວຍການນຳພາທີ່ເຂັ້ມແຂງຂອງຄະນະກຳມະການ ທີ່ໄດ້ຮັບການຝຶກອົບຮົມຄຸ້ມຄອງກິດຈະກຳການດຳເນີນງານ ຂອງກຸ່ມທີ່ມີປະສິດທິຜົນ ແລະ ສາມາດຮັບປະກັນການລິເລີ່ມການສ້າງຕັ້ງສະຫະກອນທີ່ເກີດຂຶ້ນຢ່າງໄວວາ. ເຖິງຢ່າງໃດກໍ່ຕາມ, ອຳນາດການປົກຄອງຄວນຈະໃຫ້ບູລິມະສິດໃນໄລຍະລິເລີ່ມຜັນຂະຫຍາຍຕົວແບບໃຫ້ປະສົບຜົນສຳເລັດເພື່ອເປັນການສາທິດລົງສູ່ຊຸມຊົນ.

## 6.4 ການຊີ້ນຳນຳພາໂດຍການປະສານສົມທົບຈາກສາຍຕັ້ງ ແລະ ສາຍຂວາງ

ເປັນທີ່ຮູ້ຈັກກັນຢ່າງກວ້າງຂວາງແລ້ວວ່າກຸ່ມຊາວກະສິກອນທີ່ປະສົບຜົນສຳເລັດແມ່ນເປັນກຸ່ມທີ່ມີພອນສະຫວັນ ແລະ ຄຸນນະສົມບັດທີ່ພຽບພ້ອມຂອງຜູ້ນຳກຸ່ມໂດຍສະເພາະແມ່ນຫົວໜ້າກຸ່ມ ແລະ ຜູ້ຊີ້ນຳໃນຄະນະກຳມະການທີ່ມີສ່ວນຮ່ວມ, ມີຄວາມເຄົາລົບ, ມີຄວາມໂປ່ງໃສ ໃນໜ້າທີ່ຄວາມຮັບຜິດຊອບ ແລະ ສິ່ງເສີມສາຍງານທີ່ສາມາດປະກອບສ່ວນໃຫ້ກຸ່ມມີຄວາມຍືນຍົງໄປໃນທາງດ້ານບວກ. ເຖິງແມ່ນວ່າຈະຕົກຢູ່ໃນສະພາບທີ່ເປັນອຸປະສັກຈາກສັງຄົມ ແລະ ການເມືອງທີ່ອາດຈະເປັນຂໍ້ຈຳກັດໃນການສະໜັບສະໜູນການສ້າງຄວາມອາດສາມາດໃຫ້ແກ່ຜູ້ນຳຊຸມຊົນກໍ່ຕາມ. ແຕ່ຜູ້ນຳຈະຄ່ອຍໆຊຶມຊັບວັດທະນະທຳ, ຈິດວິນຍານຕໍ່ກັບກຸ່ມທີ່ເປັນລະບົບຫຍຸ້ງຍາກ ໃນການອະທິບາຍສະຖານະການ ໃນທີ່ນີ້ສາມາດຮູ້ສຶກ ແລະ ເຂົ້າໃຈໄດ້ຢ່າງຊັດເຈນ ພາຍຫຼັງການສົນທະນາກັບສະມາຊິກພາຍໃນກຸ່ມ. ທຶນ/ຊັບສິນກໍ່ເຊັ່ນດຽວກັນກັບທຶນ/ຊັບສິນທາງສັງຄົມທີ່ບໍ່ສາມາດກຳນົດໄດ້ດ້ວຍດຳລັດໃດໆ ແຕ່ຜູ້ນຳກຸ່ມສາມາດຖືກຄົ້ນພົບໄດ້, ຖືກຮັບຮູ້ ແລະ ຖືກອົບຮົມໄດ້.

ຫົວໜ້າກຸ່ມເປັນຜູ້ທີ່ສຳຄັນ ພາຍໃນທ້ອງຖິ່ນເນື່ອງຈາກ: (i) ຫົວໜ້າກຸ່ມມີໜ້າທີ່ຮັບຜິດຊອບເຊື່ອມໂຍງສະມາຊິກໄປພ້ອມກັບການພັດທະນາສາຍພົວພັນກັບທຸກພາກສ່ວນ ພາຍໃນທ້ອງຖິ່ນ (ການປະສານສົມທົບ ທາງສາຍຂວາງ), ແລະ (ii) ຫົວໜ້າກຸ່ມເປັນຜູ້ເປີດປະຕູ ໃຫ້ກຸ່ມອອກສູ່ໂລກພາຍນອກຕົວຢ່າງເຊັ່ນ: ການເຈລະຈາຕໍ່ລອງກັນທາງດ້ານສັນຍາກັບພໍ່ຄ້າ, ການເຂົ້າເຖິງສິນເຊື່ອຈາກທາງທະນາຄານ (ການປະສານສົມທົບກັບ

ທາງສາຍຕັ້ງ). ມີຫຼາຍກໍລະນີທີ່ທາງສະມາຊິກພາຍໃນກຸ່ມເປັນສະມາຊິກພາຍໃນຄະນະປົກຄອງບ້ານຊຶ່ງເຮັດໃຫ້ການດຳເນີນງານ ຊ້ອນກັນລະຫວ່າງໂຄງຮ່າງການບໍລິຫານປົກຄອງຂອງບ້ານກັບໂຄງຮ່າງການຈັດການຄຸ້ມຄອງກຸ່ມ. ຊຶ່ງສະພາບການດັ່ງກ່າວນີ້ມີທ່າແຮງທີ່ສາມາດສະໜັບສະໜູນ ແລະ ອຳນວຍຄວາມສະດວກໃຫ້ແກ່ການປະສານສົມທົບທີ່ດີລະຫວ່າງການປົກຄອງທາງສາຍຕັ້ງຂອງກຸ່ມກັບພາກສ່ວນບໍລິຫານ ແລະ ຜູ້ທີ່ມີອິດທິພົນໃນການຕັດສິນໃຈ. ນອກຈາກນີ້, ຜູ້ນຳກຸ່ມສາມາດດັດປັບ, ອອກກົດບັງຄັບ ແລະ ລົງໂທດຕໍ່ສະມາຊິກພາຍໃນກຸ່ມຜູ້ທີ່ມີຄວາມປະພຶດບໍ່ດີໃນກຸ່ມອັນຈະເປັນການນຳທາງໄປສູ່ການດຳເນີນງານຂອງກຸ່ມບໍ່ປະສົບຜົນສຳເລັດ.

ມີຫຼາຍກໍລະນີການດຳເນີນທຸລະກິດຂະໜາດນ້ອຍຂອງບໍລິສັດ ຫຼື ພໍ່ຄ້າຈຳນວນໜຶ່ງຢູ່ໃນ ສປປລາວ ທີ່ມີການສະໜອງປັດໄຈຂາເຂົ້າຫຼາຍຢ່າງໃຫ້ແກ່ຊາວກະສິກອນ ນັ້ນເຫັນວ່າບໍ່ໄດ້ປະສົບຜົນສຳເລັດເທົ່າທີ່ຄວນ ເນື່ອງຈາກວ່າພາຍຫຼັງຊາວກະສິກອນສາມາດ ເກັບກ່ຽວຜົນຜະລິດໄດ້ເຂົາເຈົ້າເຫຼົ່ານັ້ນ ພັດຂາຍຜົນຜະລິດໃຫ້ແກ່ພໍ່ຄ້າຜູ້ທີ່ໃຫ້ລາຄາສູງກວ່າ ທາງບໍລິສັດທີ່ມາລົງທຶນໃຫ້. ດັ່ງນັ້ນ, ເຮັດໃຫ້ບໍລິສັດ ແລະ ພໍ່ຄ້າທີ່ມາລົງທຶນໃຫ້ຊາວກະສິກອນໃນເບື້ອງຕົ້ນ ບໍ່ມີເຄື່ອງມືທາງດ້ານກົດໝາຍທີ່ຈະສາມາດຄຸ້ມຄອງ ຫຼື ດຳເນີນສັນຍາທີ່ໄດ້ລະບຸໄວ້. ຫາກເປັນຄືແນວນັ້ນເນື່ອງປາສະຈາກຄວາມໄວ້ວາງໃຈຊຶ່ງກັນ ແລະ ກັນກັບຜູ້ນຳກຸ່ມແລ້ວເຮັດໃຫ້ພວກເຂົາຢຸດເຊົາສະໜອງການບໍລິການທາງດ້ານການຕະຫຼາດ. ອີກດ້ານໜຶ່ງ, ມີບົດລາຍງານຫຼາຍບົດທີ່ກ່າວວ່າ ພໍ່ຄ້າພາຍໃນຊຸມຊົນເປັນຜູ້ສະໜອງວັດຖຸດິບ, ມີຄວາມເຄົາລົບໃນສັນຍາ ແລະ ຖືກຖືວ່າເປັນຊັບສິນຂອງຊາວບ້ານ. ການສ້າງຄວາມດຸ່ນດ່ຽງທາງດ້ານອຳນາດພາຍໃນກຸ່ມແມ່ນເປັນຊັບສິນອັນໜຶ່ງທີ່ຂາດບໍ່ໄດ້ເພື່ອເປັນການຫຼີກລ້ຽງສະພາບການສ້າງອຳນາດກຸ່ມກ້ອນຊຶ່ງຄົນດຽວເປັນຜູ້ຕັດສິນວ່າຜູ້ໃດເປັນຜູ້ມີສ່ວນໃນກຸ່ມ ຫຼື ບໍ່ມີສ່ວນໃນກຸ່ມ, ຜູ້ໃດມີສິດໄດ້ຮັບຜົນປະໂຫຍດ ຫຼື ຄວນຖືກໂທດ.

## 6.5 ຂະບວນການຮຽນຮູ້ຄຸ້ມຄອງຄວາມເຄັ່ງຕຶງໃນການກົດກັນກັບການເປີດປະຕູສູ່ໂລກພາຍນອກ

ການຫັນປ່ຽນຈາກກຸ່ມຊາວກະສິກອນໄປເປັນສະຫະກອນການຜະລິດທີ່ເປັນສະມາຄົມເພື່ອເພີ່ມລາຍຮັບ ຊຶ່ງຮຽກຮ້ອງໃຫ້ມີຄວາມພະຍາຍາມບຳລຸງຮັກສາຄວາມເປັນອັນໜຶ່ງອັນດຽວພາຍໃນກຸ່ມໃນຂະນະທີ່ກຸ່ມ ກຳລັງເຕີບໃຫ່ຍຂະຫຍາຍຕົວ. ຕົວຢ່າງເຊັ່ນ: ການລວມຕົວກັນເຂົ້າເປັນສະມາຊິກໃໝ່ໃນການຈັດຕັ້ງປະຕິບັດກິດຈະກຳໃໝ່. ໂຄງຮ່າງການປົກຄອງແບບບໍ່ເປັນທາງການໄດ້ມີການປັບຕົວທີ່ດີ ໃນການຮ່ວມກຸ່ມຂະໜາດນ້ອຍຊຶ່ງເຂົາເຈົ້າຮູ້ຈັກກັນ ເປັນຢ່າງດີມາກ່ອນ ແລະ ມີຄວາມໄວ້ວາງໃຈຊຶ່ງກັນ ແລະ ກັນໃນທຸກໆການດຳເນີນງານແຕ່ອາດຈະບໍ່ເໝາະສົມ ທີ່ຈະເປັນການຜູກມັດ ໃນການດຳເນີນກິດຈະກຳທາງດ້ານທຸລະກິດການຜະລິດທີ່ໃຫຍ່ກວ່າ. ບັນຫາທີ່ເກີດຂຶ້ນເລື້ອຍໆແມ່ນເກີດ ຈາກການປ່ຽນແປງສັດສ່ວນການດຳເນີນງານ ທີ່ບໍ່ໄດ້ນຳໄປສູ່ການປ່ຽນແປງໃນລະບົບການປົກຄອງ. ຕາມທຳມະດາແລ້ວ, ວິທີການຄຸ້ມຄອງພື້ນຖານພາຍໃນບ້ານເປັນວິທີການທີ່ບໍ່ຄ່ອຍມີປະສິດທິພາບ ໃນເວລາປະຕິບັດງານກັບບັນດາບໍລິສັດໃຫ່ຍໆທີ່ມີຄວາມຫວັງຕ້ອງການຈຳນວນຜະລິດຕະພັນ ຢ່າງຫຼວງຫຼາຍ ແລະ ມີມາດຕະຖານສູງ. ຊຶ່ງນາຍບ້ານເປັນຜູ້ທີ່ຫຍຸ້ງນຳ

ວຽກຫຼາຍໆຢ່າງ ໃນການຄຸ້ມຄອງກິດຈະກໍາການດໍາເນີນງານສະຫະກອນຊຶ່ງເປັນວຽກທີ່ຖືກມອບໝາຍໃຫ້ຮັບຜິດຊອບແຕ່ໄລຍະຂອງການຈັດຕັ້ງກຸ່ມຊາວກະສິກອນ. ຕົວຢ່າງເຊັ່ນ: ສະມາຊິກພາຍໃນຊຸມຊົນ ມີຄວາມເຄົາລົບນັບຖືຫົວໜ້າກຸ່ມ (ຍ້ອນເປັນຄົນຊື່ສັດ, ເອົາຈິງເອົາຈັງ, ມີຄວາມຮູ້ ແລະ ອື່ນໆ). ໃນຂະນະດຽວກັນນັ້ນ, ເຂົາເຈົ້າກໍ່ມີການປັບຕົວໃຫ້ເຂົ້າກັບໜ້າທີ່ວຽກງານ ບໍລິຫານໄດ້ດີແລ້ວພວກເຂົາເຈົ້າເຫຼົ່ານີ້ຕ້ອງເປັນຜູ້ທີ່ບໍ່ມີຫົວຄິດທາງດ້ານທຸລະກິດ ແລະ ອາດຈະບໍ່ປະສົບຜົນສໍາເລັດໃນການເຊື່ອມໂຍງຊຸມຊົນຊຶ່ງພວກຕົນຮູ້ດີເຂົ້າກັບຊຸມຊົນບ້ານອື່ນໆ (ການປະສານງານຕາມສາຍຂວາງ) ກັບກຸ່ມພາກສ່ວນທີ່ກ່ຽວຂ້ອງ (ການປະສານງານຕາມສາຍຕັ້ງ). ການຂ້າມຜ່ານລະບົບການປົກຄອງໜຶ່ງ ໄປສູ່ລະບົບອື່ນມັນພົວພັນເຖິງຂະບວນການຮຽນຮູ້ແບບລວມໝູ່ທີ່ຜູກພັນກັບພາກສ່ວນທີ່ກ່ຽວຂ້ອງ ເປັນຈໍານວນຫຼວງຫຼາຍທີ່ມີມາແຕ່ໄລຍະທໍາອິດຂອງການຈັດຕັ້ງປະຕິບັດງານ, ຕົວຢ່າງການຈັດຕັ້ງປະຕິບັດງານພາຍໃນກຸ່ມຊາວກະສິກອນ. ດັ່ງຕົວຢ່າງທີ່ສະແດງໃຫ້ເຫັນຈາກໄລຍະການຂ້າມຜ່ານການສ້າງກຸ່ມທີ່ໃຫ່ຍໄປຫາການສ້າງເຄື່ອຄ່າຍທີ່ເປັນລະບົບສົມບູນແບບ. ການປ່ຽນແປງດັ່ງກ່າວນີ້, ເນື່ອງຈາກວ່າສະຫະກອນທີ່ທັນສະໃໝແມ່ນຮຽກຮ້ອງໃຫ້ການສະໜັບສະໜູນທັກສະໃນການຄຸ້ມຄອງ ແລະ ຄຸນນະພາບຂອງບຸກຄະລາກອນ, ຊຶ່ງຄຸນສົມບັດດັ່ງກ່າວນີ້ໃນເມື່ອກ່ອນແມ່ນບໍ່ທັນມີ ຫຼື ຖືກຕີລາຄາຕໍ່າເກີນໄປ. ການສ້າງປະສົບການ ຈາກອົງການທີ່ໄດ້ຈັດຕັ້ງປະຕິບັດວຽກງານຢູ່ເຊັ່ນ: ສະຫະພັນແມ່ຍິງລາວ (ຜູ້ຍິງສ່ວນໃຫຍ່ເປັນຜູ້ລິເລີ່ມການດໍາເນີນງານການເງິນຈຸລະພາກ) ຫຼືບັນດາໂຄງການກ່ຽວກັບການປັບປຸງຊີວິດການເປັນຢູ່ (ຄອບຄົວທີ່ທຸກຍາກ ແລະ ຄວາມຫຼາກຫຼາຍທາງດ້ານຊົນເຜົ່າ ແມ່ນເປົ້າໝາຍທີ່ດີ) ເປັນໜຶ່ງຫົນທາງທີ່ຈະສາມາດ ດໍາເນີນງານໄປໄດ້ດີ. ການສະໜັບສະໜູນຄົນລຸ້ນໃໝ່ ຂອງຜູ້ປະກອບການເອກກະຊົນທີ່ເປັນເອກກະລາດ, ໂດຍຜ່ານການສ້າງຄວາມອາດສາມາດ ແລະ ສ້າງຄວາມເຂັ້ມແຂງ. ອີກດ້ານໜຶ່ງ, ແມ່ນຖືກຮັບຮູ້ວ່າມີຜົນດີຕໍ່ການປົກຄອງໃນການເຕີບໃຫຍ່ຂະຫຍາຍຕົວ. ການສ້າງຄວາມເຂັ້ມແຂງສາມາດສະແດງໃຫ້ເຫັນການຂະຫຍາຍຄວາມອາດສາມາດຂອງປະຊາຊົນໃນການສະເໜີທາງເລືອກ ແລະ ຕັດສິນໃຈປະຕິບັດງານທີ່ອາດເປັນຜົນດີ ໃຫ້ແກ່ກຸ່ມທີ່ເຂົາເຈົ້າຢູ່ນັ້ນ. ການສ້າງຄວາມເຂັ້ມແຂງ ໃຫ້ຊຸມຊົນໂດຍການເຊື່ອມໂຍງວິສະຫະກິດກະສິກໍາ ແລະ ສະຫະກອນທີ່ຮຽກຮ້ອງໃຫ້ມີການສ້າງຄວາມອາດສາມາດໃຫ້ການປົກຄອງ ໃນແຕ່ລະດັບການຈັດຕັ້ງມີຄວາມເຂັ້ມແຂງ (ລະດັບບ້ານ, ກຸ່ມບ້ານ, ເມືອງ ແລະ ແຂວງ). ຫຼັກຖານການຂະຫຍາຍຕົວທີ່ໄດ້ສະແດງໃຫ້ເຫັນເຖິງຄວາມສໍາຄັນ ຂອງການສ້າງຄວາມເຂັ້ມແຂງເພີ່ມປະສິດທິຜົນໃນການພັດທະນາ (World Bank, 2008). ເຖິງແມ່ນວ່າບໍ່ມີພຽງຮູບແບບດຽວໃນການສ້າງຄວາມເຂັ້ມແຂງ ແລະ ປະສົບການຈາກຫຼາຍໆ ໂຄງການທີ່ແຕກຕ່າງກັນໄດ້ສະແດງໃຫ້ເຫັນເຖິງການເຂົ້າເຖິງຂໍ້ມູນຂ່າວສານ, ການມີສ່ວນຮ່ວມຂອງປະຊາຊົນທຸກຍາກ, ຄວາມຮັບຜິດຊອບຂອງການປົກຄອງ, ພາກສ່ວນເອກກະຊົນ ແລະ ຄວາມອາດສາມາດຂອງຊາວກະສິກອນໃນອົງການຈັດຕັ້ງ ໃນການລະດົມທຶນຮອນ ແລະ ອອກສຽງ. ທັງໝົດນັ້ນແມ່ນເປັນອົງປະກອບທີ່ສໍາຄັນໃນການສ້າງຄວາມເຂັ້ມແຂງ.

ດັ່ງຂະບວນການຮຽນຮູ້ລວມໝູ່ສາມາດນໍາຮູບແບບມາໝູນໃຊ້ເປັນວິທີການໄດ້. ຊຶ່ງກ່ອນອື່ນໝົດແມ່ນຮຽກຮ້ອງໃຫ້ເປີດໃຈຮັບການຮຽນຮູ້ຈາກຜູ້ເຂົ້າຮ່ວມທັງໝົດ. ອັນດັບທີ່ສອງແມ່ນກົນໄກ

ການປະສານງານທີ່ຄວນຈະມີການປະເມີນຜົນຄືນ ແລະ ຄວາມສາມາດຈາກປະສົບການຢູ່ພາກສະໜາມໃນ ສປປລາວ ແລະ ກິດຈະກຳການດຳເນີນງານທີ່ດີທີ່ສຸດໃນລະດັບສາກົນ. ອັນດັບທີສາມໄດ້ແກ່ບັນດາສະຖາບັນຕ່າງໆ ດັ່ງເຊັ່ນ: "ສູນຊັບພະຍາກອນສະຫະກອນ" (ພາຍໃຕ້ອົງກອນຄຸ້ມຄອງໃດໜຶ່ງເຊັ່ນ: ສະພາອຸດສະຫະກຳ ແລະ ການຄ້າແຫ່ງຊາດ) ທີ່ສາມາດຈັດຕັ້ງໃນຮູບແບບລວມສູນຄວາມຮູ້ທີ່ກ່ຽວຂ້ອງເພື່ອການສະໜັບສະໜູນການດຳເນີນກິດຈະກຳ ແລະ ການແລກປ່ຽນບົດຮຽນ.

## 7. ສະຫຼຸບລວມ

ສະຫະກອນແບບໃໝ່ໃນ ສປປ ລາວ ແມ່ນເປັນໄປຄືແນວໃດ? ທີ່ອາດຈະຂຶ້ນກັບຂະບວນການຮຽນຮູ້ຈາກພາກສ່ວນທີ່ກ່ຽວຂ້ອງນຳກັນ. ສະຫະກອນບໍ່ແມ່ນສະຖາບັນທີ່ຢູ່ກັບທີ່ທີ່ບໍ່ມີການເໜັງຕີງແຕ່ເປັນສະຖາບັນ ທີ່ມີການປັບຕົວເຂົ້າກັບການປ່ຽນແປງທັງພາຍໃນ ແລະ ພາຍນອກຕົວຢ່າງເຊັ່ນ: ການພົວພັນຊຶ່ງກັນ ແລະ ກັນລະຫວ່າງສະມາຊິກກັບພາກສ່ວນອື່ນ ຢູ່ພາຍນອກຜົນຂອງຂະບວນການຈັດຕັ້ງປະຕິບັດວຽກງານຢ່າງຕໍ່ເນື່ອງນີ້ເປັນໄປຢ່າງບໍ່ສາມາດ ຄາດຄະເນໄດ້ຊຶ່ງຕ້ອງຂຶ້ນກັບບັນດາປັດໄຈອື່ນໆ, ຂຶ້ນກັບຜູ້ນຳພາຍໃນທ້ອງຖິ່ນ, ປະຫວັດຄວາມເປັນມາ, ການລິເລີ່ມ ແລະ ການເຕີບໃຫຍ່ຂະຫຍາຍຕົວຂອງກຸ່ມ. ຂະບວນການຮຽນຮູ້ແບບລວມໝູ່ທີ່ມີການປັບຕົວສູງຜັນແປໄປໃນທ່າມກາງການກຳເນີດສະຫະກອນທີ່ສາມາດໄດ້ຮັບບົດຮຽນ ຈາກປະສົບການທີ່ຜ່ານມາໂດຍຫຼີກລ້ຽງບົດຮຽນທີ່ຜິດພາດໃນອາດີດບົນພື້ນຖານຜົນສຳເລັດ ແລະ ບົດຮຽນທີ່ດີທີ່ສຸດຈາກສາກົນ. ແທນທີ່ຈະເປັນການອອກແບບ ແລະ ວາງແຜນນຳໃຊ້ຮູບແບບສະຫະກອນທີ່ຕາຍຕົວໃນອະນາຄົດ, ມັນຈະເປັນເລື່ອງຄຸ້ມຄ່າ ແລະ ມີປະສິດທິຜົນໃນການລົງທຶນ (i) ເພື່ອສະໜອງກອບນະໂຍບາຍທີ່ມີລັກສະນະສະໜັບສະໜູນສິ່ງແວດລ້ອມໃນການດຳເນີນທຸລະກິດ, (ii) ເພື່ອສະໜັບສະໜູນການນຳໃຊ້ກົນໄກການດຳເນີນງານຂອງສະມາຄົມໃນໄລຍະຍາວ ແລະ (iii) ເພື່ອຄຸ້ມຄອງຕິດຕາມ ແລະ ສະສົມປະສົບປະການເຂົ້າສູ່ສະຫະກອນ.

## 8. ປັດໄຈສຳຄັນທີ່ກ່ຽວຂ້ອງໃນການສ້າງນະໂຍບາຍ

1. ໃນໄລຍະແຫ່ງການຂ້າມຜ່ານຈາກການຜະລິດແບບກຸ້ມຕົນເອງຫັນໄປສູ່ການຜະລິດເປັນສິນຄ້າ, ການຈັດຕັ້ງສະຫະກອນການຜະລິດຮູບແບບໃໝ່ແມ່ນຄວາມຕ້ອງການທີ່ຈຳເປັນທີ່ສາມາດສະໜັບສະໜູນຊຸມຊົນຊົນນະບົດ ໃນການຄຸ້ມຄອງຊັບພະຍາກອນແບບລວມໝູ່ ຫຼື ເປັນການເອົາກຸ່ມຊາວກະສິກອນເຂົ້າສູ່ການປຸງແຕ່ງລະດັບທ້ອງຖິ່ນ ແລະ ເຂົ້າສູ່ຕະຫຼາດຜະລິດຕະພັນກະສິກຳຂອງທ້ອງຖິ່ນ. ຂະບວນການສ້າງຕັ້ງສະຫະກອນຕ້ອງກວມເອົາທຸກຊັ້ນຄົນ ພາຍໃນສັງຄົມແທນທີ່ຈະມີສະເພາະພຽງແຕ່ຊາວກະສິກອນ ແລະ ປະຊາຊົນຊາວຊົນນະບົດທີ່ເຮັດທຸລະກິດລວມໝູ່ຢູ່ເຂດຊົນນະບົດເທົ່ານັ້ນ.

2. ຂະບວນການຂອງການດຳເນີນງານສະຫະກອນໃນໄລຍະຊຸມປີທີ່ຜ່ານມາໄດ້ປະເຊີນກັບອຸປະສັກຫຼາຍຢ່າງ ເນື່ອງຈາກຍັງບໍ່ທັນມີກົດໝາຍ ແລະ ນະໂຍບາຍໃດທີ່ຮອງຮັບ ຊຶ່ງອາດຈະຕີ

ຄວາມໝາຍວ່າ ຍັງຂາດການຕັດສິນໃຈທາງດ້ານນະໂຍບາຍ. ຈົນມາເຖິງໃນໄລຍະຫຼັງໆຜ່ານມານີ້, ລັດຖະບານຈຶ່ງໄດ້ພະຍາຍາມຄົ້ນຄ້ວາ ແລະ ພິຈາລະນາສ້າງຮ່າງດຳລັດສະຫະກອນຂຶ້ນໂດຍໄດ້ຮັບການສະໜັບສະໜູນຂອງອົງການຈັດຕັ້ງສາກົນ. ດຳລັດທີ່ກ່ຽວຂ້ອງ ກັບສະຫະກອນການຜະລິດ ແລະ ສະມາຄົມຊາວກະສິກອນ ແມ່ນມີຄວາມຈຳເປັນຢ່າງຍິ່ງ ໃນການຈັດຕັ້ງປະຕິບັດວຽກງານປະຈຸບັນແຕ່ເງື່ອນໄຂ ທີ່ສະໜັບສະໜູນໃຫ້ການສ້າງຕັ້ງສະຫະກອນໃນ ສປປລາວ ແມ່ນຍັງບໍ່ພຽງພໍເທົ່າທີ່ຄວນ. ນອກຈາກນີ້, ນິຕິກຳກ່ຽວກັບສະຫະກອນຄວນຈະກວມເອົາປະເດັນທາງສັງຄົມຢ່າງກວ້າງຂວາງນອກເໜືອໄປກ່ວາການຜະລິດກະສິກຳ ແລະ ການຕະຫຼາດ ໂດຍໃຫ້ບູລິມະສິດໃນການດຳເນີນທຸລະກິດຂະໜາດນ້ອຍ ແລະ ໃຫ້ຊຸມຊົນຊົນນະບົດໄດ້ມີສ່ວນຮ່ວມໃນການສະແດງຄຳຄິດຄຳເຫັນຫຼາຍຂຶ້ນ.

3. ຂັ້ນເທິງບໍ່ສາມາດກຳນົດປະສິດທິຜົນ ແລະ ຄວາມຍືນຍົງຂອງສະຫະກອນໄດ້ ເນື່ອງຈາກເປັນບັນຫາ ຂອງການເຕີບໃຫຍ່ຂະຫຍາຍຕົວຂອງທາງດ້ານສະຖາບັນທີ່ກ່ຽວຂ້ອງ (ເຊັ່ນການສ້າງລະບຽບກົດໝາຍ) ຊຶ່ງຈຳເປັນຕ້ອງໄດ້ໃຊ້ເວລາຕໍ່ຂະບວນການປັບຕົວທີ່ກ່ຽວພັນເຖິງການສ້າງກຳລັງໃຫ້ມີຄວາມເຊື່ອໝັ້ນຊຶ່ງກັນ ແລະ ກັນພ້ອມທັງມີການປັບຕົວ ຕໍ່ຂະບວນການຮຽນຮູ້ແບບລວມໝູ່. ເນື່ອງຈາກຂະບວນການສະໜັບສະໜູນ ແມ່ນຈະຕ້ອງເລີ້ມຕົ້ນຈາກຂັ້ນລຸ່ມຫາຂັ້ນເທິງທີ່ມີຄວາມຈຳເປັນຕ້ອງໄດ້ມີການຝຶກອົບຮົມຢ່າງຕໍ່ເນື່ອງ, ຝຶກແອບໃຫ້ຜູ້ນຳພາຍໃນຊຸມຊົນ ມີຄວາມຄ່ອງແຄ້ວໃນການຈັດຕັ້ງປະຕິບັດງານ ແລະ ຮຽກຮ້ອງໃຫ້ມີການປະກອບສ່ວນຢ່າງເອົາຈິງເອົາຈັງຈາກພາກສ່ວນທີ່ກ່ຽວຂ້ອງໃນຫຼາຍລະດັບ.

4. ມີສາມດ້ານຂອງບັນຫາ ທີ່ຄວນເອົາໃຈໃສ່ຕໍ່ການກຳເນີດເກີດຂຶ້ນ ແລະ ຄວາມຍືນຍົງຄົງຕົວຂອງສະຫະກອນໃນນັ້ນຈະຕ້ອງໄດ້ໃຫ້ບຸລິມະສິດໃນການສະໜັບສະໜູນທາງດ້ານການສ້າງສະຖາບັນຄືດັ່ງລຸ່ມນີ້:

ການຈັດການຄຸ້ມຄອງຄວາມເໝາະສົມຂອງວຽກການອອມຊັບ/ສິນເຊື່ອໂດຍທົ່ວໄປແລ້ວແມ່ນພົວພັນເຖິງ ວຽກງານການເງິນດ້ານຊັບສິນ. ດັ່ງນັ້ນ, ການເຂົ້າເຖິງສິນເຊື່ອ ແລະ ການລະດົມທຶນແມ່ນປັດໄຈສຳຄັນ ໃນການພັດທະນາການດຳເນີນທຸລະກິດ ໃນລະດັບໃດກໍຕາມ, ຊຶ່ງເປັນສິ່ງຈູງໃຈໃນເບື້ອງຕົ້ນ ເຮັດໃຫ້ຄົນເຂົ້າມາເຕົ້າໂຮມກັນແທນທີ່ຈະເປັນການພັດທະນາດ້ວຍຄວາມພະຍາຍາມສ່ວນຕົວຂອງບຸກຄົນ. ຖ້າຫາກບໍ່ມີການອອມຊັບສິນເຊື່ອ ຫຼື ບໍ່ໄດ້ຖືກຄຸ້ມຄອງຢ່າງເຂັ້ມງວດຈະເຮັດໃຫ້ກຸ່ມນັ້ນໆລົ້ມລະລາຍໄປ.

ຄວາມໝຽວແໜ້ນຂອງການຈັດຕັ້ງກຸ່ມແບບລວມໝູ່ແມ່ນຮຽກຮ້ອງ ໃຫ້ການນຳຂອງກຸ່ມມີຄວາມເຂັ້ມແຂງ, ຍຸດຕິທຳ ແລະ ດຳເນີນງານຢ່າງເປັນລະບົບລະບຽບ ລວມທັງການກວດກາ ຈາກສັງຄົມພາຍນອກພ້ອມດ້ວຍການລົງໂທດອື່ນໆຕໍ່ສະມາຊິກພາຍໃນກຸ່ມ. ການພົວພັນຊຶ່ງກັນ ແລະ ກັນລະຫວ່າງສະມາຊິກພາຍໃນກຸ່ມບໍ່ຄວນຖືວ່າເປັນພຶດຕິກຳຄົງທີ່, ຄວນຈະມີການຜັນແປປ່ຽນແປງເປັນປະຈຳ ເພື່ອເປັນການປັບປຸງກຸ່ມ ແລະ ປັບຕົວໃຫ້ເຂົ້າກັບກາລະໂອກາດອັນໃໝ່, ກັບເຫດການທີ່ເກີດຂຶ້ນໂດຍບັງເອີນ, ກັບການແຂ່ງຂັນທີ່ດຸເດືອດ ແລະ ຕໍ່ການປ່ຽນແປງສະພາບແວດລ້ອມອ້ອມຂ້າງອື່ນໆ.

ຂະບວນການເຕີບໃຫ່ຍຂະຫຍາຍຕົວ ແລະ ຄວາມຄອງຕົວ ຂອງການຈັດຕັ້ງເປັນກຸ່ມແບບລວມໝູ່ຈຳເປັນຕ້ອງໄດ້ຄຸ້ມຄອງ ໂດຍການດຸ່ນດ່ຽງລະຫ່ວາງຄວາມກົມກຽວພາຍໃນ (ສະມາຊິກ, ຜູ້ນຳກຸ່ມ ແລະ ອື່ນໆ) ແລະ ການເປີດປະຕູສູ່ໂລກພາຍນອກ (ທີ່ມີການເຈລະຈາຕໍ່ລອງທາງດ້ານສິນເຊື່ອ, ການຕະຫຼາດ ແລະ ອື່ນໆ). ດັ່ງນັ້ນ, ຈຶ່ງມີຄວາມສຳຄັນຂອງການຄາດຄະເນລ່ວງໜ້າສຳລັບການຈະເລີນເຕີບໂຕຂອງກຸ່ມ (ອັນໄດ້ແກ່ການຄຸ້ມຄອງສະມາຊິກທີ່ມີຄວາມຫຼາກຫຼາຍປະເພດຈາກມູນທາງດ້ານເສດຖະກິດ-ສັງຄົມ) ແລະ ການວາງແຜນການຂະຫຍາຍຕົວຂອງກຸ່ມຢ່າງລະມັດລະວັງເພື່ອເປັນການຫຼີກລ້ຽງການມອບໝາຍວຽກຫຼາຍເກີນຄວາມສາມາດ ແລະ ຄວາມກົມກຽວກັນພາຍໃນກຸ່ມຕໍ່ການດຳເນີນທຸລະກິດໃໝ່ ຫຼື ການເພີ່ມຂຶ້ນຂອງຈຳນວນສະມາຊິກໃໝ່.

5. ໄດ້ມີຫຼາຍໆໂຄງການຕົວແບບ ແລະ ຈາກປະສົມການໃນການດຳເນີນງານຂອງກຸ່ມຊາວກະສິກອນໃນ ສປປລາວ ທີ່ເປັນພື້ນຖານອັນດີ ເພື່ອສະໜັບສະໜູນການກຳເນີດຂອງສະຫະກອນຈາກພາຍໃນຕົວມັນເອງ (ທີ່ບໍ່ແມ່ນຕົວແບບຈາກພາຍນອກທີ່ນຳມາປັບປຸງໃຫ້ເຂົ້າກັບຊຸມຊົນທ້ອງຖິ່ນ). ການສຶກສາຈາກປະສົບການ ແລະ ບົດຮຽນທີ່ຜ່ານມາທີ່ມີທັງບົດຮຽນທີ່ປະສົບຜົນສຳເລັດ ແລະ ບົດຮຽນທີ່ປະເຊີນກັບບັນຫາຕ່າງໆນັ້ນເປັນສິ່ງຈຳເປັນທີ່ສຸດເພື່ອເປັນການສະໜັບສະໜູນໃຫ້ແກ່ການສ້າງນະໂຍບາຍໃໝ່. ດັ່ງນັ້ນ, ກົນໄກຈຳນວນໜຶ່ງຈຳເປັນຕ້ອງພັດທະນາຂຶ້ນມາ ເພື່ອສະສົມຄວາມຮູ້ໄປພ້ອມໆກັບຂະບວນການກໍ່ສ້າງທາງດ້ານສະຖາບັນລວມທັງລະບົບການຕິດຕາມປະເມີນຜົນແບບມີສ່ວນຮ່ວມ.

## ເອກະສານອ້າງອີງ


**Behrle S.,** ທະນາຄານບ້ານຢູ່ເຂດຊຸມຊົນພູດອຍ. ການປັບປຸງລະບົບການດຳລົງຊີວິດຢູ່ເຂດພູດອຍໃນ ສປປ ລາວ, Vol.1.NAFRI-NAFES-NUOL, ນະຄອນຫຼວງວຽງຈັນ, ໜ້າ. 239-244.

**Bergeret P., 2002.** Paysans, Etat et Marches au Vietnam : Dix Ans de Cooperation dans le Bassin du Fleuve Rouge. Karthala, Paris.

**Connell J.G., 2005.** ການພັດທະນາວິສະຫະກິດກະສິກຳຂະໜາດນ້ອຍຢູ່ເຂດພູດອຍ (SADU) : ຖອດຖອນບົດຮຽນ. CIAT-NAFRI, ນະຄອນຫຼວງວຽງຈັນ, ໜ້າ 26.

**ດາລາຈັນທະລາ ສ., 2004.** ການເງິນຊົນນະບົດ ແລະ ການເງິນຈຸລະພາກ ໃນສປປລາວ, NERI, ນະຄອນຫຼວງວຽງຈັນ, ໜ້າ 71.

**ດາລາຈັນທະລາ ສ., 2006.** ການສ້າງຄວາມອາດສາມາດ ແລະ ສິ່ງທ້າທາຍຂອງການເງິນຈຸລະພາກ: ທັດສະນີຍະພາບຂອງ ສປປ ລາວ. ການສະເໜີກອງປະຊຸມສຸດຍອດສິນເຊື່ອຈຸລະພາກໂລກ 2006 ຢູ່ Halifax, Nova Scotia, ປະເທດການາດາ. MCBR/NERI, ນະຄອນຫຼວງວຽງຈັນ.

**Datta D., 2007.** Community-managed rice banks: lessons from Laos. Development in Practice 17 (3), 410-418.

**EDC, 2002.** Study on Generating Employment through Micro and Small Enterprise and Cooperative Development in Lao PDR. Enterprise Development Consultants Co. Ltd. (eds.), International Labour Office, Bangkok, 68 p.

**Fichtl A., Scoizec A., 2005.** Entrusting animals: A revolving livestock fund concept from Phongsaly. In: Improving Livelihoods in the Uplands of the Lao PDR, vol. 1. NAFRI – NAFES – NuoL, Vientiane, pp. 245-248.

**Foppes J., Phommasane S., 2006.** Local initiatives to link farmers to markets in upland Laos. Mountain Research and Development 26(3), 200-204.

**Fullbrook D., 2007.** Contract Farming in Lao PDR: Cases and Questions. LEAP, Vientiane, 59 p.

**Guegan F., 2007.** La Coopération Internationale et les ONG Françaises au Laos. Histoires et Stratégies d'Acteurs de 1986 à 2005. Comité de Coopération avec le Laos, Paris, Vientiane, 395 p.

**High H., 2006.** "Join together, work together, for the common good – solidarity": Village formation processes in the rural south of Laos. SOJOURN: Journal of Social Issues in Southeast Asia 21(1), 22-45.

**Ledecq T., Vongkhamsao V., Grouwels S., 2006.** Non-wood forest product community-based enterprise development: a way for livelihood improvement in Lao People's Democratic Republic. Forestry Policy and Institutions Working Paper No. 16, FAO, Rome, 49 p.

**Machima P., Prakash D., 1987.** Cooperatives for Development of the Rural Poor. Centre on Integrated Rural Development for Asia and the Pacific (CIRDAP), Dhaka, Bangladesh, 65 p.

**Manivong K., Manivong V. and-Phouyyavong K., 2005.** Marketing Study, Samat-Saysana Zone, Sayabouly District. Poverty Alleviation in Remote Upland Areas Project, Care, Vientiane, 62 p.

**Olson M., 1973.** The Logic of Collective Action: Public Goods and the Theory of Groups. Harvard University Press, Cambridge, MA.

**Phomvihane K., 1986.** Turning Natural Economy to Commercialized Economy.

**Rankin M.K., Russel I.W., 2006.** Emerging structures of farmer cooperatives in Vietnam: case studies from the Mekong Delta. In: JP Batt (ed.) Proceedings of the First International Symposium on Improbving the Performance of Supply Chains in the

Transitional Economies, Chiang Mai, Thailand, 19-23 July 2005. International society for Horticultural Science, Brugge, Belgium, pp. 365-372.

**Ratanamalai A., 2002.** Critical Study of Agricultural Cooperatives in Lao PDR. Institute of Trade Strategies, Bangkok, 170 p.

**Sriboonchitta S., Wiboonpoongse A., 2008**. Overview of Contract Farming in Thailand: Lessons Learned. ADB Institute Discussion Paper no 112, ADBI, Tokyo, 17 p.

**Vientiane Times, 2001.** Party Congress Special: Report to the Seventh Party Congress, 16-19 March 2001, 8(21), 10-12.

**Von Pischke J.D., Rouse J.G., 2004.** New Strategies for Mobilizing Capital in Agricultural Cooperatives. Food and Agriculture Organization of the United Nations, Rome, 51 p.

**World Bank, 2008.** Community-Driven Approaches in Lao PDR. Moving Beyond Service Delivery. Human Development Sector Unit, East Asia and Pacific Region. The World Bank, Vientiane, 26p.

**Za-Zenchu Study Team, 2008.** Agricultural and Farmers' Organisations and Proposal to Establish Pilot Projects on Agricultural Cooperatives in Lao PDR. Report of the Ja-Zenchu Study Team, 20 January – 1 February 2008. The Central Union of Agricultural Cooperatives of Japan, Tokyo, Japan, 46 p.

ຕາຕະລາງ 2. ລາຍຊື່ບັນດາໂຄງການທີ່ໄດ້ປຶກສາຫາລື ແລະ ທົບທວນເອກະສານ ໂດຍຈັດຕັ້ງປະຕິບັດງານຮ່ວມກັບກຸ່ມຊາວກະສິກອນ ແລະ ການພັດທະນາຊຸມຊົນ

| ຊື່ໂຄງການ | ຈາກການສຳພາດ | ຈາກບົດລາຍງານ |
|---|---|---|
| ADB-NAFES- ໂຄງການຄຸ້ມຄອງອ່າງໂຕ່ງ (ນ້ຳງື່ມ)/2003-2011 | X | |
| ADB-UNODC- ໂຄງການຍຸດຕິການຖາງປ່າເຮັດໄຮ່ ແລະ ລົບລ້າງການປູກຝິ່ນ, ແຂວງຫົວພັນ | X | |
| AFD-PDDP- ໂຄງການພັດທະນາຊົນນະບົດ ຢູ່ແຂວງຜົ້ງສາລີ | X | |
| AFD-PCADR-PASS- ກຸ່ມຜູ້ຜະລິດສາລີ ຢູ່ທາງພາກໃຕ້ຂອງແຂວງໄຊຍະບູລີ | | X |
| AFD-PCADR-PAB- ສະມາຄົມຜູ້ຜະລິດກາເຟ ຢູ່ບໍລິເວນ | | X |
| CARE Laos- ຫຼຸດຜ່ອນຄວາມທຸກຍາກ ຢູ່ເຂດຊົນນະບົດພູດອຍ (PARUA) | | X |
| CCSP- ສະຫະກອນສິນເຊື່ອເພື່ອສົ່ງເສີມການຜະລິດຂະໜາດນ້ອຍ- ຜະລິດຕະພັນຊາວກະສິກອນລາວ | X | |
| CIDSE Laos- ແຜນພັດທະນາຊຸມຊົນ | X | |
| DGRV- ມູນລະນິທິທະນາຄານ Raiffaisen ເຢຍລະມັນ - ແຜນງານສະຫະກອນພາກພື້ນ | X | |
| EC- ໂຄງການພັດທະນາຈຸລະພາກ ພາຍໃຕ້ຊຸມຊົນພື້ນຖານ (MDLC) | | X |
| FAO-NAFES- ໂຄງການຄ້ຳປະກັນສະບຽງອາຫານ/2003-2008 | X | |
| FAO-NAFRI- ໂຄງການພັດທະນາລະບົບການຕະຫຼາດເຄື່ອງປ່າຂອງດົງ/2004-2006 | X | |
| ໂຄງການເພື່ອນຊາວກະສິກອນ, ແຂວງຫຼວງນ້ຳທາ | | X |
| GTZ-RDMA- ການພັດທະນາຊົນນະບົດຢູ່ເຂດພູດອຍແບບມີສ່ວນຮ່ວມຢູ່ທາງພາກເໜືອຂອງລາວ | | X |
| ໂຄງການ HEIFER-NAFRI-ໂຄງການລ້ຽງສັດ 2005-2008 | X | |

| | | |
|---|---|---|
| IFAD-NAFES- ໂຄງການພັດທະນາຜະລິດເປັນສິນຄ້າ/2001-2010 | X | |
| IUCN-NAFRI- ການນຳໃຊ້ເຄື່ອງປ່າຂອງດົງໃຫ້ຍືນຍົງ, ກໍລະນີສຶກສາແຂວງອຸດົມໄຊ | | X |
| JICA-FORCOM- ໂຄງການຄຸ້ມຄອງປ່າໄມ້ພາຍໃນຊຸມຊົນ/2004-2009 | | X |
| MRC-NAFRI- ໂຄງການຄຸ້ມຄອງການປະມົງ/2005-2006 | X | |
| SDC-NAFRI/CIAT- ວິສະຫະກິດກະສິກຳຂະໜາດນ້ອຍຢູ່ເຂດພູດອຍພາກເໜືອຂອງລາວ ແລະ ຫວຽດ ນາມ (SADU) | X | |
| VECO- ກຸ່ມສົ່ງເສີມຊາວກະສິກອນໃນການເຂົ້າເຖິງຕະຫຼາດ ຢູ່ແຂວງບໍ່ແກ້ວ | X | |
| WB-FINNIDA-NAFES-SUFORD- ປ່າຊົມໃຊ້ ແລະ ການພັດທະນາຊົນນະບົດ/2003-2008 | X | |
| WB-NAFES- ໂຄງການພັດທະນາກະສິກຳ(ADP)/2002-2006 | X | |
| WB- ໂຄງການກອງທຶນຫຼຸດຜ່ອນຄວາມທຸກຍາກ | X | |
| WWF-NAFES- ໂຄງການເກັບກູ້ ແລະ ປຸງແຕ່ງຫວາຍ/2006-2008 | X | |

Box 1. ປະຫວັດຄວາມເປັນມາຂອງດຳລັດສະຫະກອນໃນສປປລາວ
(ດັດແກ້ມາຈາກ Za-Zenchu, 2008)

ໃນປີ 1986, ທ່ານ. ໄກສອນ ພົມວິຫານປະທານປະເທດແຫ່ງ ສປປລາວ ໄດ້ເສີມຂະຫຍາຍແນວຄວາມຄິດໃນການສ້າງຕັ້ງສະຫະກອນແບບໃໝ່ໃນສປປລາວ, ໂດຍທ່ານໄດ້ແຈ້ງໃຫ້ຊາບຮ່າງກົດໝາຍສະຫະກອນ ແລະ ລະບຽບການທີ່ກ່ຽວຂ້ອງ (ພົມວິຫານ, 1986). ໃນປີ 2000, ກອງປະຊຸມສຳມະນາແລກປ່ຽນບົດຮຽນແຫ່ງຊາດ ໄດ້ຈັດຂຶ້ນພາຍໃຕ້ຫົວຂໍ້ "ມູນມອງຂອງສະຫະກອນກະສິກຳໃນລາວ"ປະກອບມີຜູ້ເຂົ້າຮ່ວມຫຼາຍກວ່າ 75 ທ່ານ ທີ່ມາຈາກຫຼາຍພາກສ່ວນອົງການຈັດຕັ້ງລັດຖະບານ ເປັນຕົ້ນແມ່ນມາຈາກມະຫາວິທະຍາໄລ ແລະ ສະຖາບັນຕ່າງໆ. ຫຼັງຈາກສຳເລັດກອງປະຊຸມດັ່ງກ່າວນີ້ນັກຄົ້ນຄວ້າ ແລະ ຊ່ຽວຊານຫຼາຍໆທ່ານ ໄດ້ສະຫຼຸບຜົນການຈັດຕັ້ງປະຕິບັດ ແລະ ສິ້ນສຸດລົງດ້ວຍການສະເໜີຂໍ້ແນະນຳ (ລັດຕະນະມະໄລ., 2002: EDC, 2002). ຈົນມາເຖິງປີ 2005, ລັດຖະບານໄດ້ສະເໜີໃຫ້ມີການສ້າງຕັ້ງ ແລະ ສົ່ງເສີມສະຫະກອນກະສິກຳທີ່ທັນສະໃໝຂຶ້ນ ໂດຍຜ່ານສະພາແຫ່ງຊາດ ກໍ່ຄືກອງປະຊຸມພັກ ແລະ ລັດຖະບານທີ່ໄດ້ມີຮຽກຮ້ອງ ໃຫ້ມີການອອກນິຕິກຳຢ່າງເປັນທາງການ. ພາຍຫຼັງໄດ້ມີຄຳຮຽກຮ້ອງດັ່ງກ່າວນີ້ລັດຖະບານ ຍັງໄດ້ສະເໜີໃຫ້ສະຖາບັນຄົ້ນຄວ້າເສດຖະກິດແຫ່ງຊາດ, ກະຊວງອຸດສະຫະກຳ ແລະ ການຄ້າເປັນຜູ້ຮ່າງດຳລັດວ່າດ້ວຍສະຫະກອນ. ຊຶ່ງຮ່າງດຳລັດດັ່ງກ່າວໄດ້ຖືກສົ່ງໄປຫາ ສຳນັກງານນາຍຍົກລັດຖະມົນຕີ ເພື່ອປະກອບຄຳເຫັນ ແລ້ວສົ່ງໃຫ້ກະຊວງຍຸດຕິທຳຢູ່ໃນຊ່ວງປີ 2005. ຫຼັງຈາກນັ້ນ, ກອງປະຊຸມສຳມະນາລະດັບຊາດ ໄດ້ຈັດຂຶ້ນທີ່ນະຄອນຫຼວງວຽງຈັນ ໃນເດືອນເມສາ 2007 ເປັນປະທານໂດຍສະຫະພັນສະຫະກອນນາໆຊາດປະຈຳພາກພື້ນອາຊີ-ປາຊີຟິກ ໂດຍການຮ່ວມມືກັນກັບກະຊວງກະສິກຳ ແລະ ປ່າໄມ້. ຊຶ່ງເນື້ອໃນການດຳເນີນກອງປະຊຸມ ໄດ້ປຶກສາຫາລືເຖິງຮ່າງດຳລັດສະຫະກອນ ໂດຍການປະກອບຄຳຄິດຄຳເຫັນຈາກພາກສ່ວນທີ່ເຂົ້າຮ່ວມ. ການປະກອບຄຳຄິດຄຳເຫັນ ດັ່ງກ່າວນີ້ໄດ້ຖືກລວບລວມເຂົ້າກັບຮ່າງດຳລັດ ແລະ ໄດ້ສົ່ງໃຫ້ສຳນັກງານນາຍຍົກໃນເດືອນມິຖຸນາ 2007 ເພື່ອເຊັນອະນຸມັດ ແລະ ປະກາດໃຊ້ເປັນກົດໝາຍ. ຈົນມາເຖິງເດືອນມີນາ 2010, ທ່ານນາຍົກລັດຖະມົນຕີ ໄດ້ອອກດຳລັດສະຫະກອນ.

Box 2. ປະສົບການຂອງ “ສະມາຄົມເພື່ອການພັດທະນາສັງຄົມຊົນນະບົດຢູ່ລາວ” (ແຫຼ່ງຂໍ້ມູນ: ຈາກການສຳພາດ ທ່ານດຣ. ສີສະຫຼຽວສະແຫວງສຶກສາ ແລະ ທ່ານ. ລັດຕະປະເສີດ ທຍຸຍອານິດວົງ-ກິຕຳ ແລະ ດັດແກ້ມາຈາກ Guegan, 2007).

*ປະຫວັດຄວາມເປັນມາຂອງສະມາຄົມເພື່ອການພັດທະນາສັງຄົມຊົນນະບົດຢູ່ໃນລາວ (ASDSP)* ສົມຄວນທີ່ຈະໄດ້ຈາລຶກໄວ້ເນື່ອງຈາກສະມາຄົມດັ່ງກ່າວ ໄດ້ເປັນຜູ້ບຸກເບີກນຳພາການປະສົມປະສານ ສາມຮູບແບບກຸ່ມຊາວກະສິກອນໄດ້ແກ່: ການພັດທະນາຊຸມຊົນ, ສິນເຊື່ອ-ອອມຊັບ ແລະ ການຕະຫຼາດ-ການປຸງແຕ່ງ. ທີ່ໄດ້ສະໜອງຂະບວນການຮຽນຮູ້ໂດຍລົງເລິກ ແລະ ຜັນຂະຫຍາຍຂະບວນການຫັນເປັນສະຫະກອນ. ການລິເລີ່ມທີ່ໃຫ້ຄວາມຫ້ວງອີກອັນໜຶ່ງແມ່ນໂຄງການທີ່ໄດ້ຈັດຕັ້ງປະຕິບັດຜ່ານມາ ແມ່ນຢູ່ໃນໄລຍະ 3-5 ປີ. ໃນຂະນະດຽວກັນສະມາຄົມເພື່ອການພັດທະນາສັງຄົມຊົນນະບົດຢູ່ໃນລາວ (ASDSP) ກໍ່ໄດ້ສ້າງຕັ້ງຂຶ້ນ ໃນປີ 1988, ໄດ້ເຕີບໃຫ່ຍຂະຫຍາຍຕົວເຕັມທີ່ ທີ່ໄດ້ໃຫ້ພວກເຮົາຫວນເບິ່ງຄືນປະຫວັດໃນ 20 ປີຜ່ານມາຂອງອົງກອນດັ່ງກ່າວ. ໃນຂະນະທີ່ມີໜຶ່ງດຽວດ້ວຍຫຼາຍຮູບການ ແລະ ບໍ່ຊ້ຳແບບຂອງໃຜ (ບໍ່ສາມາດຫຼີກລ່ຽງສະພາບເງື່ອນໄຂ ແລະ ຄົນທີ່ມີທັດສະນະແຕກຕ່າງໄດ້ ແລະ ໄດ້ມີຫຼາຍໆບົດຮຽນທີ່ຜ່ານມາທີ່ສາມາດຖອດຖອນໄດ້ ເພື່ອໃຫ້ເກີດຜົນປະໂຫຍດໃນການລິເລີ່ມສະຫະກອນໃໝ່.

ທ່ານ. ແສງດາວ ວັງແກ້ວໄຊ, ເປັນຜູ້ລິເລີ່ມສັນຍາທຳການຜະລິດກະສິກຳຜູ້ທຳອິດຢູ່ໃນຊ່ວງທ້າຍປີ 1970 ຢູ່ເມືອງກາສີແຂວງວຽງຈັນ. ຊຶ່ງການສ້າງສັນຍາ ທຳການຜະລິດດັ່ງກ່າວນັ້ນເພື່ອເປັນການຄ້ຳປະກັນ ການສະໜອງຜົນຜະລິດສາລີ ປ້ອນໂຮງງານທົ່ວອາຫານສັດທີ່ທ່ານເອງເປັນຜູ້ຄຸ້ມຄອງຢູ່ນະຄອນຫຼວງວຽງຈັນ.ທ່ານໄດ້ພະຍາຍາມຈັດຕັ້ງ“ສະຫະກອນທັນສະໃໝ” ໂດຍອີງຕາມສະຫະກອນ ໃນຮູບແບບຂອງປະເທດຝຣັ່ງ ແຕ່ມັນພັດບໍ່ສອດຄ່ອງກັບສະຫະກອນແຫ່ງລັດໃນສະໃໝດຽວກັນນັ້ນ. ໃນຊຸມຕົ້ນປີ 1990, ພາຍຫຼັງທີ່ເປີດປະເທດສູ່ຕະຫຼາດເສດຖະກິດ ທ່ານໄດ້ອອກແບບວາງແຜນ ແລະ ຈັດຕັ້ງປະບັດໂຄງການພັດທະນາແບບປະສົມປະສານຢູ່ເຂດເມືອງກາສີ ຮ່ວມກັບກຸ່ມນັກຮຽນຮູ້ຂອງລາວ (ທີ່ປະກອບມີ ທ່ານ ດຣ.ສີສະຫຼຽວສະແຫວງສຶກສາ, ຮອງຫົວໜ້າສະຖາບັນຄົ້ນຄວ້າວິທະຍາສາດສັງຄົມ) ແລະ ອົງການ NGOs ປະຈຳປະເທດຝຣັ່ງ ທີ່ເປັນຜູ້ສະໜັບສະໜູນທາງດ້ານການເງິນ. ໃນເວລານັ້ນ, ສະມາຄົມເພື່ອການພັດທະນາສັງຄົມ ຊົນນະບົດຢູ່ໃນລາວ (ASDSP) ແມ່ນເປັນສະມາຄົມໜຶ່ງທີ່ດຳເນີນງານຢູ່ພາຍໃຕ້ກົດໝາຍສະມາຄົມຂອງປະເທດຝຣັ່ງ ແລະ ຍັງສາມາດລະດົມເງິນເພື່ອສະໜັບສະໜູນກິດຈະກຳການພັດທະນາໃນລາວ ຊຶ່ງໂຄງການແມ່ນ ໄດ້ຈັດຕັ້ງປະບັດໂດຍການລົງທະບຽນຂອງບໍລິສັດທີ່ປຶກສາ ທີ່ໄດ້ສ້າງຂຶ້ນຮ່ວມກັນ ໂດຍແມ່ນ ທ່ານ. ແສງດາວ ແລະ

ທ່ານ ດຣ. ສີສະຫຼຽວ. ໃນຊ່ວງປີ 1990-1994, "ໂຄງການພັດທະນາແບບປະສົມປະສານຢູ່ເຂດເມືອງກາສີ" ໄດ້ສະໜັບສະໜູນຊຸມຊົນພາຍໃນທ້ອງຖິ່ນ ໃນການສ້າງຝາຍກັ້ນນ້ຳ, ຂຸດທາງ, ຊຶ່ງທາງໂຄງການໄດ້ສະໜອງປັດໄຈພື້ນຖານອັນປະກອບດ້ວຍການບໍລິການສິນເຊື່ອ ແລະການຝຶກອົບຮົມໃຫ້ຜູ້ຜະລິດຂະໜາດນ້ອຍ. ຈາກຫຼາຍໆນະວັດຕະກຳທີ່ພົວພັນເຖິງການເງິນຈຸລະພາກ ຫຼື ການຄຸ້ມຄອງທີ່ດິນທີ່ໄດ້ທົດສອບ ແລະ ສົ່ງເສີມກິດຈະກຳໃນຫຼາຍໆບ້ານ ໂດຍຫັນປ່ຽນເຂດພື້ນທີ່ທຳການຜະລິດໄປສູ່ການຜະລິດສາລີ, ໝາກໂມ ແລະ ຖົ່ວດິນ. ໃນໄລຍະເບື້ອງຕົ້ນຂອງໂຄງການໄດ້ສົ່ງເສີມແນວຄວາມຄິດໃນການຈັດຕັ້ງໃຫ້ແກ່ຜູ້ຜະລິດເຂົ້າໃນ "ສະມາຄົມຊາວກະສິກອນເພື່ອເປັນການພັດທະນາເມືອງກາສີ". ເຖິງຢ່າງໃດກໍ່ຕາມ, ອຳນາດການປົກຄອງໄດ້ຮຽກຮ້ອງໃຫ້ມີການປ່ຽນຊື່ສະມາຄົມຊາວກະສິກອນເປັນ "ສະຫະກອນຊາວກະສິກອນເມືອງກາສີ" ຊຶ່ງເປັນຮູບແບບໜຶ່ງທີ່ສອດຄ່ອງກັບນະໂຍບາຍການເມືອງ ໃນໄລຍະນັ້ນ. ໃນປີ 1992, ອຳນາດການປົກຄອງໄດ້ລະແວງສົງໄສຕໍ່ໂຄງການ ແລະ ສັ່ງປິດໂຄງການກະທັນຫັນ, ຕໍ່ມາຈຶ່ງມີຄວາມຈຳເປັນຕ້ອງໄດ້ມີການເຈລະຈາຕໍ່ລອງທີ່ຍາວນານ ເຮັດໃຫ້ອຳນາດການປົກຄອງເຊື່ອໝັ້ນວ່າການຈັດຕັ້ງຂອງຊາວກະສິກອນບໍ່ໄດ້ມີເຫດຜົນໃດມາແອບແຝງນອກເໜືອໄປກວ່າການພັດທະນາທ້ອງຖິ່ນ ໂດຍການເພີ່ມຜົນຜະລິດທາງດ້ານກະສິກຳ. ໂຄງການຈຶ່ງໄດ້ຮັບອະນຸຍາດໃຫ້ດຳເນີນຕໍ່ຈົນເຖິງໄລຍະສຸດທ້າຍໃນປີ 1995. ຫຼັງຈາກນັ້ນ, ຊັບສິນທຸກຢ່າງຂອງໂຄງການ ແມ່ນໄດ້ມອບໃຫ້ຊຸມຊົນຜູ້ເຮັດການຜະລິດ ໂດຍການປ່ຽນຮູບແບບໂຄງການໄປເປັນສະຫະກອນສິນເຊື່ອ ເຊັ່ນ: ບໍລິສັດການເງິນເອກະຊົນລົງທະບຽນກັບທະນາຄານແຫ່ງຊາດລາວ ຊຶ່ງບັນຫາດັ່ງກ່າວນີ້ໄດ້ກໍ່ໃຫ້ເກີດສະຫະກອນສິນ ເຊື່ອໃນຄັ້ງທຳອິດຢູ່ໃນ ສປປລາວ. ການຄຸ້ມຄອງ ແລະ ເປັນເຈົ້າການເອງຂອງຊາວກະສິກອນ ເມືອງກາສີໄດ້ເຮັດໃຫ້ເຂົາເຈົ້າສາມາດສືບຕໍ່ຈັດຕັ້ງປະຕິບັດງານຕາມແຕ່ລະກິດຈະກຳທີ່ພວກເຂົາໄດ້ລິເລີ່ມຜ່ານມາຈາກທາງໂຄງການ.

ມີສາມກິດຈະກຳທີ່ໄດ້ຮັບຜົນສຳເລັດໃນໄລຍະທຳອິດໃນປີ 1996 ໄດ້ແກ່ກິດຈະກຳການສ້າງຝາຍກັນນ້ຳ (ປະກອບມີ 2000 ໂຄງການຊົນລະປະທານ), ກິດຈະກຳປຸງແຕ່ງຜົນຜະລິດກະສິກຳ (ບໍລິສັດຜະລິດຕະພັນຊາວກະສິກອນລາວ) ແລະ ກິດຈະກຳສິນເຊື່ອຈຸລະພາກ (ສະຫະກອນສິນເຊື່ອເພື່ອການຜະລິດຂະໜາດນ້ອຍ CCSP) ແມ່ນປະສົມປະສານ ເຂົ້າເປັນລະບົບສະຫະກອນໃນທົ່ວປະເທດ ແລະ ມີການພົວພັນກັບຕ່າງປະເທດເປັນຈຳນວນຫຼວງຫຼາຍ. "ກຸ່ມ" ໃນທີ່ນີ້ບໍ່ໄດ້ລວມເອົາຊາວກະສິກອນພຽງຢ່າງດຽວ ແຕ່ເປັນການປະສົມປະສານການດຳເນີນທຸລະກິດທີ່ປະກອບດ້ວຍສະຫະກອນ "ພັດທະນາຊຸມຊົນ", "ສິນເຊື່ອ ແລະ ອອມຊັບ" ແລະ "ການປຸງແຕ່ງ ແລະ ການຕະຫຼາດ" ເນື່ອງຈາກຕະຫຼາດລາວ ແມ່ນຍັງແຄບບໍ່ທັນສາມາດສະໜອງການຄ້າໃນທາງກວ້າງໄດ້ເທື່ອ. ຜະລິດຕະພັນກະສິກອນລາວ ແມ່ນໄດ້ຖືກສ້າງຕັ້ງຂຶ້ນໃນ

ປີ 1994 ໃນນາມເປັນວິສະຫະກິດສະຫະກອນການຄ້າ ທີ່ສາມາດຄຸ້ມຄອງເພື່ອການສົ່ງອອກຜະລິດຕະພັນປຸງແຕ່ງຜົນຜະລິດລາວ. ພາຍຫຼັງທີ່ໃຊ້ຄວາມພະຍາຍາມອັນຍາວນານ ໃນການທົດລອງ ແລະ ຈາກບົດຮຽນທີ່ຜິດພາດຜ່ານໃນການສ້າງວິສະຫະກິດ ທີ່ໄດ້ຮັບການສະໜັບສະໜູນຈາກເຄືອຂ່າຍ ການຄ້າຍຸດຕິທຳສາກົນ ແລະ ສາມາດເພີ່ມບໍລິມາດຂອງຜົນຜະລິດຂຶ້ນຈາກຄວາມຫຼາກຫຼາຍຂອງຜະລິດຕະພັນ (ປະມານ 40 ກວ່າຜະລິດຕະພັນ). ທາງບໍລິສັດໄດ້ຈ້າງພະນັກງານ 200 ຄົນ, ໃນນັ້ນ 80 ຄົນ ແມ່ນເຮັດວຽກເຕັມເວລາ. ຕົກມາເຖິງປີ 2001, ບໍລິສັດໃໝ່ບໍລິສັດໜຶ່ງ ຊື່ວ່າຜະລິດຕະພັນບາຈຽງ ໄດ້ຖືກສ້າງຕັ້ງຂຶ້ນໂດຍກຸ່ມຊາວກະສິກອນທາງພາກໃຕ້ຂອງລາວ. ຊຶ່ງເປັນລັກສະນະທີ່ສຳຄັນ ໃນໄລຍະຕົ້ນຂອງການຂະຫຍາຍກິດຈະກຳເປັນຕົ້ນແມ່ນ ກ່ຽວກັບຕະຫຼາດສຳລັບຜະລິດຕະພັນ ທີ່ໄດ້ປຽບທາງການຄ້າທີ່ໄດ້ຮັບການປົກປ້ອງຈາກຄູ່ແຂ່ງທາງການຄ້າ. ລະບົບການສົ່ງສິນຄ້າຍຸດຕິທຳທີ່ເນັ້ນໃສ່ການສົ່ງ ອອກ (70 ສ່ວນຮ້ອຍຂອງຜະລິດຕະພັນທີ່ສົ່ງອອກ) ໄດ້ຊ່ວຍໃຫ້ບໍລິສັດຫຼີກລ່ຽງຈາກຜົນກະທົບທາງດ້ານລົບຂອງຕະຫຼາດ ພາຍໃນທ້ອງຖິ່ນທີ່ ມີຢ່າງຈຳກັດ, ຜູ້ທີ່ບໍ່ມີຄວາມລະມັດລະວັງໄດ້ນຳໃຊ້ຍຸດທະສາດ ການຂາຍສິນຄ້າແບບທຸບທຶນ ເພື່ອທຳລາຍຄວາມພະຍາຍາມຂອງຄູ່ແຂ່ງນ້າງເພ ກົດລະບຽບໃນການຄ້າ ຫຼື ສັນຍາເພື່ອສວຍໂອກາດເກງເອົາກຳໄລໃນໄລຍະສັ້ນ ແລະ ອື່ນໆ.

ການເງິນຈຸລະພາກແມ່ນເປັນຂະແໜງການໜຶ່ງທີ່ສຳຄັນ ໃນການດຳເນີນງານໄລຍະຕົ້ນການຈັດຕັ້ງກຸ່ມຊາວກະສິກອນ. ໃນທັນໃດນັ້ນກຸ່ມໄດ້ສະແດງໃຫ້ເຫັນແຈ້ງວ່າການທີ່ບໍ່ມີສິນເຊື່ອນັ້ນເຮັດໃຫ້ທຸກກິດຈະກຳ ທີ່ຈັດຕັ້ງປະຕິບັດໂດຍໂຄງການພັດທະນາແບບປະສົມປະສານຈະບໍ່ສາມາດໄປໄດ້ຕະຫຼອດຮອດຝັ່ງ. ໃນປີ 1996, ໂຄງການການເງິນຈຸລະພາກໄດ້ສະໜອງສະຫະກອນສິນເຊື່ອເພື່ອທຸລະກິດຂະໜາດນ້ອຍ (CCSP) ຢູ່ນະຄອນຫຼວງວຽງຈັນ ແລະ ໄດ້ພົບກັບອຸປະສັກ ເນື່ອງຈາກຂາດກອບທາງດ້ານກົດໝາຍໃນການບໍລິຫານ. ໃນຊ່ວງທ້າຍປີ 1996, ດຳລັດສະຫະກອນສິນເຊື່ອຈຸລະພາກ ທີ່ເປັນທາງການໄດ້ຖືກວາງອອກ ເພື່ອເຮັດໃຫ້ຂັ້ນຕອນການບໍລິຫານຖືກຕ້ອງກັບຂົງເຂດວຽກງານ. ສະຫະກອນສິນເຊື່ອ ເພື່ອທຸລະກິດຂະໜາດນ້ອຍ (CCSP) ເປັນສະຫະກອນທຳອິດ ທີ່ໄດ້ລົງທະບຽນ ຢ່າງເປັນທາງການພາຍໃຕ້ກົດລະບຽບໃໝ່. ມາເຖິງປະຈຸບັນ, ຈຳນວນສາຂາສະຫະກອນສິນເຊື່ອ ເພື່ອທຸລະກິດຂະໜາດນ້ອຍແມ່ນໄດ້ຂະຫຍາຍເຖິງ 12 ແຫ່ງ, ກວມເອົາ 9 ແຂວງທົ່ວປະເທດ, ພ້ອມໃຫ້ບໍລິການຊາວກະສິກອນປະມານ 1.500 ຄົນ, ພໍ່ຄ້າ ແລະ ວິສະຫະກິດສິນເຊື່ອ. ດັ່ງໃນນາມເປັນສະມາຊິກພາຍໃນສະຫະກອນສິນເຊື່ອ ກໍ່ຄືຜູ້ທີ່ກູ້ຢືມເງິນເຂົາເຈົ້າມີສິດມີສຽງ ຕໍ່ກັບການຄຸ້ມຄອງສະຫະກອນໄດ້. ໃນປີ 2003, ໂຄງສ້າງການປະສານງານໃໝ່ຂອງກອງທຶນສະຫະກອນແມ່ນໄດ້ຮັບການສ້າງຕັ້ງຂຶ້ນເພື່ອເຕົ້າໂຮມເອົາເປັນສະຫະພັນ ໃນແຕ່ລະຂະແໜງການຈັດຕັ້ງປະຕິບັດວຽກ

ງານພາຍໃນກຸ່ມທີ່ມີທ່າອ່ຽງເຄື່ອນໄຫວ ເປັນເອກກະລາດພໍໃຜພໍລາວ. ດັ່ງທີ່ຮູ້ກັນແລ້ວວ່າໂຄງຮ່າງດັ່ງກ່າວນີ້ແມ່ນມີຄວາມຈຳເປັນ ໃນການເຮັດໃຫ້ເຫັນພາບລວມຄວາມເປັນອັນໜຶ່ງອັນດຽວຂອງກຸ່ມ ແລະ ເພື່ອລວມສູນການເຈລະຈາກັບພາກສ່ວນພາຍນອກເຊັ່ນ: ສະຖາບັນຜູ້ໃຫ້ທຶນ ແລະ ບໍລິສັດຕ່າງໆທີ່ເຂົ້າມາລົງທຶນ. ກອງທຶນສະຫະກອນຍັງໄດ້ສະໜອງ ການບໍລິການຂໍ້ມູນຂ່າວສານໃຫ້ແກ່ສະມາຊິກ ເພື່ອໃຫ້ເຂົາເຈົ້າສາມາດບູລະນະຮັກສາກິດຈະກຳ ແລະ ມີນ້ຳໃຈໃນການຄຸ້ມຄອງສະຫະກອນ. ລ່າສຸດນີ້, ກອງທຶນສະຫະກອນໄດ້ມີການປະເມີນຜົນຄືນເຖິງສະຫະກອນສິນເຊື່ອເພື່ອທຸລະກິດຂະໜາດນ້ອຍ (CCSP) ໂດຍສະເພາະໃນໄລຍະລິເລີ່ມຂອງການສ້າງຕັ້ງ ແລະ ສະໜອງເຄືອຂ່າຍຢ່າງປອດໄພ ໃນກໍລະນີທີ່ເກີດບັນຫາ (ຕົວຢ່າງເຊັ່ນ: ໃນໄລຍະໄພເງິນກີບເຟີ້ຊ່ວງປີ 1990, ເມື່ອມູນຄ່າຂອງເງິນກີບຕົກຕ່ຳກວມເຖິງ 95 ສ່ວນຮ້ອຍ ເມື່ອທຽບກັບສະກຸນເງິນຕາໂດລາ ໃນແຕ່ລະປີ) ຫຼື ເປັນການເພີ່ມທຶນການຜະລິດຂຶ້ນ. ກອງທຶນສະຫະກອນ ໄດ້ກາຍມາເປັນອົງການຈັດຕັ້ງໜຶ່ງ ທີ່ມີການສະໜອງສິນເຊື່ອເປັນເງິນກີບ ໃຫ້ແກ່ສະຫະກອນສິນເຊື່ອເພື່ອທຸລະກິດຂະໜາດນ້ອຍ (CCSP) ແລະ ວິສະຫະກິດຂະໜາດນ້ອຍ (ທີ່ລວມທັງກຸ່ມສະຫະກອນທາງດ້ານການຕະຫຼາດ ແລະ ການປຸງແຕ່ງເຊັ່ນ: ຜະລິດຕະພັນຂອງຊາວກະສິກອນລາວ ແລະ ຜະລິດຕະພັນບາຈຽງ).

ຈາກຫຼາຍໆບົດຮຽນທີ່ຜ່ານມາໃນຊ່ວງທ້າຍປີ 1980 ສາມາດຖອດຖອນໄດ້ວ່າ: ອັນດັບທຳອິດແມ່ນການເປັນຜູ້ນຳອັນເຂັ້ມແຂງ ທີ່ຍຶດໝັ້ນໃນມິດຕະພາບ, ການໄວ້ວາງໃຈຕໍ່ກັນ ແລະ ແລກປ່ຽນອຸດົມການດ້ານສະຫະກອນລວມໝູ່ ຂອງທັງສອງຄົນອັນໄດ້ແກ່: ທ່ານ. ແສງດາວ ແລະ ທ່ານ ດຣ. ສີສະຫຼຽວ. ອັນດັບທີສອງ ແມ່ນໄດ້ຮັບຜົນປະໂຫຍດ ຈາກການຕິດຕໍ່ພົວພັນກັບພະນັກງານລັດເປັນຢ່າງດີ. ນັບຕັ້ງແຕ່, ເລີ້ມມີໜໍ່ແໜງກຸ່ມຊາວກະສິກອນ ເກີດຂຶ້ນມາ ແລະ ກຸ່ມກໍ່ເປັນທີ່ຍອມຮັບໃນເຈດຕະນາດີ ເນື່ອງຈາກກຸ່ມດັ່ງກ່າວ ທີ່ບໍ່ໄດ້ຖືກອານຸມັດໃນເບື້ອງຕົ້ນ, ແຕ່ໄດ້ພິສູດໃຫ້ເຫັນວ່າຍ້ອນມີຄວາມພະຍາຍາມ ແລ້ວພະຍາຍາມອີກເພື່ອເຮັດໃຫ້ຫາຍຂໍ້ສົງໄສຂອງເຈດຕະນາທີ່ບໍ່ດີ ໂດຍການໃຫ້ສິດສຽງແກ່ປະຊາຊົນ ຜູ້ທຸກຍາກໃນການອອກຄຳຄິດຄຳເຫັນ. ສາຍພົວພັນໄດ້ຖືກສານຕໍ່ກັບພາກສ່ວນອົງກອນ ທີ່ບໍ່ຂຶ້ນກັບລັດ (NGOs), ສະຖາບັນຜູ້ໃຫ້ທຶນຈາກປະເທດຝຣັ່ງ ແລະ ຈາກບັນດາປະເທດເອີຣົບ ໂດຍໄດ້ລິເລີ່ມສ້າງແຮງບັນດານໃຈເພື່ອໃຫ້ໂຄງການໃໝ່ບັນລຸຜົນ ທີ່ໄດ້ປູທາງໃຫ້ແກ່ປະຫວັດຄວາມເປັນມາຂອງການສ້າງຕັ້ງກຸ່ມ. ອົງການຈັດຕັ້ງສາມັກຄີເຫຼົ່ານີ້ ໄດ້ມີແນວຄວາມຄິດສອດຄ່ອງກັນເບື້ອງຕົ້ນຂອງສະຫະກອນ ແລະ ຂະບວນການໄຕ່ເຕົ້າກ້າວຂຶ້ນ ຂອງບັນດາຫົວໜ້າສະຫະກອນດີກ່ວາສະຖາບັນຜູ້ໃຫ້ທຶນທີ່ໃຫຍ່, ຜູ້ທີ່ຕ້ອງການດຳເນີນງານ ໄປພ້ອມກັບໂຄງການໃຫຍ່ທີ່ລົງເລິກເຖິງການບໍລິຫານຄຸ້ມຄອງຂອງລາວ ແລະ ໄດ້ມີການຕິດຕໍ່ພົວພັນບໍ່ຫຼາຍກັບສັງຄົມພົນລະເຮືອນ. ໂຄງການດັ່ງກ່າວໄດ້ຖືກຄຸ້ມຄອງ ໂດຍຄົນທີ່ມີການສຶກສາ, ມີທັກສະ ແລະ ມີຄວາມກະຕືລື

ລົ້ນສູງ, ເປັນຜູ້ດັດປັບໃຫ້ແທດເໝາະກັບຄວາມສາມາດ ຂອງພວກເຂົາເຈົ້າເອງ ແລະ ເຮັດໃຫ້ຄວາມຮູ້ຂອງພວກເຂົາເຈົ້າບໍລິສຸດແກ່ສັງຄົມ. ຊຶ່ງທັງໝົດນີ້ໝາຍຄວາມວ່າ: ບໍ່ຄືກັບບາດກ້າວການພັດທະນາຂອງຫຼາຍໆໂຄງການສາກົນ ລວມໄປເຖິງວິທີການປົກຄອງທີ່ໂປ່ງໃສ, ຮູບແບບການແກ້ໄຂຂໍ້ຂັດແຍ່ງ ແລະ ອື່ນໆ. ທັງໝົດນັ້ນຖືກຄວບຄຸມ ໂດຍປະຊາຊົນລາວເພື່ອຜົນປະໂຫຍດຂອງປະຊາຊົນ.